ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-04 ມິຖຸນາ 2022
ປີທີ 11
ສະບັບທີ 848

## ສະພາແຫ່ງຊາດ ສະຫລອງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ

(ສພຊ) ສາມອົງການຈັດຕັ້ງມະຫາຊົນຂອງສະພາແຫ່ງຊາດ ຮ່ວມກັບຄະນະຮັບຜິດຊອບກອງທຶນຊ່ວຍເຫລືອສັງຄົມສະພາແຫ່ງຊາດ ຈັດພິທີສະເຫລີມສະຫລອງວັນເດັກນ້ອຍສາກົນ ຄົບຮອບ 72 ປີ (01/6/1950-01/6/2022) ແລະ ວັນປູກຕົ້ນໄມ້ແຫ່ງຊາດ ຄົບຮອບ 42 ປີ (01/6/1980-01/6/2022) ໃນວັນທີ 31 ພຶດສະພານີ້, ທີ່ສະພາແຫ່ງຊາດ ໂດຍການເຂົ້າຮ່ວມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາຄະນະນຳຂອງສະພາແຫ່ງຊາດ ແລະ ລູກ-ຫລານຂອງບັນດາພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.



ໃນພິທີ, ທ່ານ ນາງ ມະນີວັນ ເຍຍປາວເຮີ ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ໄດ້ຂຶ້ນກ່າວເປີດພິທີວ່າ: ການສະເຫລີມສະຫລອງວັນເດັກສາກົນ 1 ມິຖຸນາໃນແຕ່ລະປີ ເປັນການສ້າງໂອກາດໃຫ້ພວກເຮົາໄດ້ທົບທວນຄືນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ນິຕິກຳຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ລວມທັງເປົ້າໝາຍການພັດທະນາແບບຍືນຍົງທີ່ພົວພັນເຖິງວຽກງານແມ່ ແລະ ເດັກ ກໍຄືສົນທິສັນຍາສາກົນກ່ຽວກັບເດັກທີ່ ສປປລາວ ເປັນພາຄີ ລວມທັງເປັນການໂຄສະນາເຜີຍແຜ່ຢ່າງກວ້າງຂວາງກ່ຽວກັບແນວທາງນະໂຍບາຍຂອງພັກ ແລະ ລັດເຮົາ. ເພື່ອເປັນການປູກຈິດສຳນຶກໃຫ້ແກ່ພະນັກງານ-ລັດຖະກອນ, ຜູ້ປົກຄອງເດັກ ແລະ ລູກຫລານ ຂອງພະນັກງານທົ່ວສະພາແຫ່ງຊາດ ກໍຄືໃນທົ່ວສັງຄົມໄດ້ຮັບຮູ້ຄວາມໝາຍ ແລະ ຄວາມສຳຄັນຂອງວັນເດັກສາກົນ ກໍຄືວັນປູກຕົ້ນໄມ້ແຫ່ງຊາດ ເຊິ່ງພິທີສະເຫລີມສະ

ອ່ານຕໍ່ໜ້າ 2

## ຊົມເຊີຍການຮ່ວມມື ລະຫວ່າງສອງອົງການນິຕິບັນຍັດ ລາວ-ຫວຽດນາມ

ໂດຍຕອບສະໜອງຕາມຄຳເຊີນຂອງສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກປະຊາຊົນ ປະຕິວັດລາວ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ, ສະຫາຍ ເວືອງ ດິ່ງ ເຫວ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ ປະທານສະພາແຫ່ງຊາດ ແຫ່ງສາທາລະນະລັດສັງຄົມນິຍົມຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ໄດ້ເດີນທາງມາຢ້ຽມຢາມສັນຖະວະໄມຕີ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢ່າງເປັນທາງການ ໃນລະຫວ່າງວັນທີ 15-17 ພຶດສະພາ 2022.

ອ່ານຕໍ່ໜ້າ 3

## ສະມາຊິກພັກພາຍໃນສະພາແຫ່ງຊາດ ເຊື່ອມຊຶມເອກະສານສຳຄັນຕ່າງໆຂອງອົງຄະນະພັກ

(ສພຊ) ກອງປະຊຸມເຜີຍແຜ່ເອກະສານສຳຄັນຕ່າງໆຂອງອົງຄະນະພັກສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 30 ພຶດສະພາ 2022 ທີ່ສະພາແຫ່ງຊາດຫລັງໃໝ່, ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມມີບັນດາຄະນະປະຈຳ, ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ,

ອ່ານຕໍ່ໜ້າ 2



## ໄພແລ້ງ ແລະ ຄວາມຮ້ອນ

\# ດົ້ນກົບເມກ

ວັນທີ 1 ເດືອນມິຖຸນາ ເປັນວັນປູນຕົ້ນໄມ້ທີ່ບ້ານເຮົາ ກໍຄືຫລາຍພາກສ່ວນໄດ້ຈັດຕັ້ງພິທີປູກຕົ້ນໄມ້ທຸກປີ ເພື່ອເປັນການເພີ່ມປະລິມານ ຕົ້ນໄມ້ໃຫ້ແກ່ປ່າໄມ້ ແລະ ສ້າງບັນຍາກາດໃຫ້ຊຸ່ມເຢັນ.

ປີນີ້ຕາມການຖະແຫລ່ງຂ່າວ ໃນວັນທີ 28 ພຶດສະພາ 2022 ກະຊວງກະສິກຳ-ປ່າໄມ້ ວາງແຜນຈະປູກໃນເນື້ອທີ 1.213 ເຮັກຕາ ມີເບ້ຍໄມ້ກຽມໄວ້ແລ້ວ 1.456.233 ເບ້ຍ (ໄມ້ດູ່, ໄມ້ແຕ້ຄ່າ, ໄມ້ຍາງ, ໄມ້ສັກ, ໄມ້ແຄນ, ໄມ້ສົ້ມຝາດ, ໄມ້ຂະຍຸງ, ໄມ້ແຕ້ສໍ, ໄມ້ສະຢາງ, ໄມ້ກາກະເລົາ, ໄມ້ຄູນ ແລະ ໄມ້ສາມສາ).

ອ່ານຕໍ່ໜ້າ 3

## ຊຸກຍູ້ແຜນການທ່ອງທ່ຽວ ສີຂຽວ ແລະ ການເປີດປະເທດ



(ສພຊ) ໃນລະຫວ່າງວັນທີ 19-20 ພຶດສະພາຜ່ານມານີ້, ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ທີ່ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ເມືອງວັງວຽງ, ເມືອງໂພນໂຮງ, ເມືອງແກ້ວອຸດົມ ແລະ ເມືອງທຸລະຄົມ ແຂວງວຽງຈັນ ໃຫ້ກຽດຕ້ອນຮັບ ແລະ ລົມທົບຮ່ວມເຄື່ອນໄຫວຄັ້ງນີ້ ໂດຍແມ່ນ

ອ່ານຕໍ່ໜ້າ 3

## ປະເມີນການປະຕິບັດກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ

(ສພຊ) ເພື່ອສະຫລຸບຕີລາຄາການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ແລະ ສະຫລຸບຖອດຖອນບົດຮຽນໃນການປະເມີນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຕ່າງໆໃນຕໍ່ໜ້າ ໃນວັນທີ 24 ພຶດສະພາ 2022, ທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍ ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວປະເມີນການປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບລົງວັນທີ 14 ພະຈິກ 2016 ຢູ່ກະຊວງແຜນການ ແລະ ການລົງທຶນ ເຊິ່ງກົດໝາຍດັ່ງກ່າວແມ່ນໜຶ່ງໃນບັນດາກົດໝາຍຂົງເຂດເສດຖະກິດ ທີ່ມີຄວາມສຳຄັນໃນການຊຸກຍູ້, ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃນການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ.

ໃນການເຄື່ອນໄຫວປະເມີນໃນຄັ້ງນີ້, ໄດ້ຮັບຟັງການລາຍງານກ່ຽວກັບສະພາບການປະເມີນການຈັດຕັ້ງປະຕິບັດກົດໝາຍ ນັບແຕ່ປີ 2017 ເປັນຕົ້ນມາ ຈາກຫົວໜ້າກົມສົ່ງເສີມການລົງທຶນ ກະຊວງແຜນການ ແລະ ການລົງທຶນ ເຊິ່ງໄດ້ລາຍງານກ່ຽວກັບສະພາບລວມຄວາມເປັນມາຂອງກົດໝາຍ, ການຈັດຕັ້ງປະຕິບັດກົດໝາຍ, ການໂຄສະນາເຜີຍແຜ່ກົດໝາຍ, ການຜັນຂະຫຍາຍເປັນນິຕິກຳໃຕ້ກົດ

ອ່ານຕໍ່ໜ້າ 3

## ສາມອົງການຕັ້ງມະຫາຊົນ ສພຊ ຮັບເຄື່ອງອຸປະຖຳຈາກພາກສ່ວນຕ່າງໆ

(ສພຊ) ວັນທີ 30 ພຶດສະພາ 2022 ທີ່ສະພາແຫ່ງຊາດ, ສາມອົງການຈັດຕັ້ງມະຫາຊົນສະພາແຫ່ງຊາດ ໄດ້ຮັບເຄື່ອງອຸປະຖຳຈາກ ທ່ານ ນາງ ບົວຄຳ ທິບພະວົງ ອາດີດສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ ທັງເປັນອາດີດປະທານກຳມາທິການຍຸຕິທຳ ແລະ ຈາກບັນດາຄອບຄົວການນຳຂອງສະພາແຫ່ງຊາດ; ເຊິ່ງຕາງໜ້າໃຫ້ສາມອົງການຈັດຕັ້ງມະຫາຊົນສະພາແຫ່ງຊາດ ຮັບໂດຍທ່ານ ໄກມະນີນ ເທບບົວລີ ຮອງເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ທັງເປັນວ່າ

ອ່ານຕໍ່ໜ້າ 3


ໜ້າ 4



ໜ້າ 7


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5



## ສະພາແຫ່ງຊາດ...

ຫລອງນີ້ ປະກອບມີຫລາຍກິດຈະກຳຕ່າງໆ ຄື: ພິທີປູກຕົ້ນໄມ້ເປັນທີ່ລະນຶກ ຂອງຄະນະປະຈຳສະພາແຫ່ງຊາດກັບຫລານນ້ອຍ, ຈັດໃຫ້ນັກຮຽນມາຢ້ຽມຊົມຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ການສະແດງສິລະປະ-ວັນນະຄະດີ, ເດີນແຟຊັນໂຊຂອງເດັກ, ຫລິ້ນເກມຖາມ-ຕອບ ຄວາມຮູ້ຮອບຕົວ, ຄວາມຮູ້ດ້ານວິທະຍາສາດ ແລະ ມອບຂອງຂວັນ, ກວດສຸຂະພາບ, ແຈກຢາຍວິຕາມິນ, ເຂົ້າໜົມ ແລະ ອາຫານໃຫ້ແກ່ເດັກ.

ໃນພິທີສະເຫລີມສະຫລອງດຳເນີນດ້ວຍບັນຍາກາດທີ່ຟົດຟື້ນ ໄດ້ຮັບການຊີ້ນຳ, ການສ້າງເງື່ອນໄຂອຳນວຍຄວາມສະດວກ ຈາກຄະນະພັກ, ຄະນະປະຈຳສະພາແຫ່ງຊາດ, ການສະໜັບສະໜູນດ້ານງົບປະມານ, ການປະກອບສ່ວນວັດຖຸ-ປັດໄຈຈາກຄະນະເລຂາທິການສະພາແຫ່ງຊາດ, ຄະນະກອງທຶນຊ່ວຍເຫລືອສັງຄົມຂອງສະພາແຫ່ງຊາດ ກໍຄືຄອບຄົວການນຳຂອງສະພາແຫ່ງຊາດ, ກຸ່ມທະນາຄານພົງສະຫວັນ, ບໍລິສັດເບຍລາວ, ບໍລິສັດເມົາຕິເຜັສ, ໂຮງໝໍລາວ-ອາຊຽນ ແລະ ການຮ່ວມຈິດຮ່ວມໃຈຂອງສະມາຊິກສາມອົງການຈັດຕັ້ງມະຫາຊົນຂອງສະພາແຫ່ງຊາດຢ່າງຕັ້ງໜ້າ.

ໄລຍະຜ່ານມາ, ພັກ ແລະ ລັດເຮົາ ເວົ້າລວມ, ເວົ້າສະເພາະ ຄະນະພັກ, ຄະນະນຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ຊີ້ນຳ ແລະ ວາງນະໂຍບາຍ, ສ້າງ-ປັບປຸງນິຕິກຳທີ່ຕິດພັນກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ລວມມີ 22 ສະບັບ, ເອົາໃຈໃສ່ວຽກງານສຶກສາອົບຮົມ ແລະ ກໍ່ສ້າງເດັກໃຫ້ມີນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ສ້າງ ແລະ ຂະຫຍາຍໂຮງຮຽນສາມັນ, ໂຮງຮຽນວິຊາຊີບ, ສະຖານທີ່ເບິ່ງແຍງປິ່ນປົວ, ສົ່ງເສີມໃຫ້ເດັກໄດ້ມີສ່ວນຮ່ວມໃນການເຄື່ອນໄຫວທາງສັງຄົມ, ສ້າງ ແລະ ປັບປຸງມາດຕະການໃນການປົກປ້ອງເດັກຈາກການຂູດຮີດ, ການປະລະ, ການທາລຸນ ແລະ ອື່ນໆ, ທົ່ວສັງຄົມມີຄວາມຮັບຜິດຊອບປະກອບສ່ວນສ້າງ ແລະ ພັດທະນາເດັກທາງດ້ານຮ່າງກາຍ, ສະຕິປັນຍາ ເປັນຕົ້ນເຂົ້າຮ່ວມໃນການສ້າງສະຖານທີ່ປິ່ນປົວສຸຂະພາບ, ສຶກສາຮ່ຳຮຽນ, ເຄື່ອນໄຫວສິລະປະ-ວັນນະຄະດີ, ກິລາ-ກາຍະກຳ ແລະ ປົກປ້ອງເດັກຈາກສິ່ງຫຍໍ້ທໍ້ຕ່າງໆໃນສັງຄົມ.

(ນາງ ໄຊໂສພາພອນ ມິ່ງມຸງຄຸນ)

## ສະມາຊິກ...

ຄະນະພັກຮາກຖານ ພ້ອມດ້ວຍບັນດາສະມາຊິກພັກພາຍໃນສະພາແຫ່ງຊາດ.

ໃນກອງປະຊຸມ ໄດ້ຮັບຟັງການເຜີຍແຜ່ມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ສະໄໝທີ IV ສະບັບເລກທີ 14/ຄພ.ສພຊ, ລົງວັນທີ 16 ພຶດສະພາ 2022; ເຜີຍແຜ່ແຜນພັດທະນາຂອງສະພາແຫ່ງຊາດ ໄລຍະ 5 ປີ 2021-2025 ສະບັບເລກທີ 07/ຄພ.ສພຊ, ລົງວັນທີ 16 ພຶດສະພາ 2022; ຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການອະນຸມັດໃຫ້ພະນັກງານອອກຮັບອຸດໜູນບຳນານ; ຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຕຳແໜ່ງບໍລິຫານປະເພດ 2 ຂັ້ນຫົວໜ້າກົມ; ຜ່ານມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຊັບປ່ຽນໜ້າທີ່ ແລະ ບ່ອນປະຈຳການ ຂອງພະນັກງານພາຍໃນສະພາແຫ່ງຊາດ; ຜ່ານມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການອະນຸມັດໃຫ້ພະນັກງານອອກຮັບອຸດໜູນບຳນານ; ຜ່ານມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຕຳແໜ່ງບໍລິຫານປະເພດ 2 ຂັ້ນຫົວໜ້າກົມ; ຜ່ານຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຕຳແໜ່ງບໍລິຫານປະເພດ 4 ຂັ້ນຫົວໜ້າພະແນກ; ຜ່ານຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຕຳແໜ່ງບໍລິຫານປະເພດ 5 ຂັ້ນຮອງຫົວໜ້າພະແນກ; ຜ່ານບົດສະຫລຸບການເຄື່ອນໄຫວວຽກງານຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022 ຢູ່ພາຍໃນສາພະແຫ່ງຊາດ; ຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຍ້ອງຍໍກົມກອງ ແລະ ບຸກຄົນ ປະຈຳປີ 2021; ຜ່ານຂໍ້ຕົກລົງຂອງຄະນະເລຂາທິການສະພາແຫ່ງຊາດ ດ້ວຍການຍ້ອງຍໍກົມກອງ ແລະ ບຸກຄົນປະຈຳປີ 2021; ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ກົມກອງທີ່ໄດ້ຮັບໃບຍ້ອງຍໍຂອງຄະນະປະຈຳ.

ໃນຕອນທ້າຍ, ກອງປະຊຸມໄດ້ຮັບຟັງການໂອ້ລົມຂອງສະຫາຍນາງ ສູນທອນ ໄຊຍະຈັກ ເຊິ່ງສະຫາຍໄດ້ມີຄຳເຫັນເນັ້ນໜັກບາງບັນຫາເພີ່ມເຕີມວ່າ: ໃຫ້ຄະນະບໍລິຫານງານພັກ, ຄະນະພັກຮາກຖານ, ໜ່ວຍພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ອົງການຈັດຕັ້ງມະຫາຊົນ ແລະ ສະມາຊິກພັກທຸກສະຫາຍ ຕ້ອງໄດ້ສືບຕໍ່ຄົ້ນຄວ້າ ເຊື່ອມຊຶມກຳແໜ້ນບັນດາເນື້ອໃນຈິດໃຈຂອງມະຕິສະບັບນີ້ຢ່າງເລິກເຊິ່ງຕື່ມ ເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ເຂັ້ມງວດ; ເອົາໃຈໃສ່ປະຕິບັດວຽກງານການກໍ່ສ້າງພັກໃຫ້ປອດໃສ ເຂັ້ມແຂງ ແລະ ໜັກແໜ້ນ, ການສ້າງ ແລະ ຂະຫຍາຍພັກ ໃຫ້ມີຄຸນນະພາບ ແລະ ໃຫ້ຖືກຕ້ອງກົດລະບຽບຢ່າງເຂັ້ມງວດ, ເພີ່ມທະວີໃນການປະຕິບັດລະບອບແບບແຜນວິທີເຮັດວຽກ ແລະ ກົນໄກການປະສານງານວຽກພັກ-ວຽກລັດ ໃຫ້ມີຄວາມໂລ່ງລຽນ, ກົມກຽວກັນດີຂຶ້ນເລື້ອຍໆ; ສຳລັບແຜນພັດທະນາຂອງສະພາແຫ່ງຊາດ ໄລຍະ 2021-2025 ແມ່ນໄດ້ອີງໃສ່ສະພາບຄວາມເປັນຈິງ ທີ່ໄດ້ຕີລາຄາຜົນສຳເລັດ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງລວມ ທີ່ໄດ້ລະບຸໄວ້ໃນບົດລາຍງານການເມືອງຂອງອົງຄະນະພັກສະພາແຫ່ງຊາດ ຕໍ່ກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ IV ແລະ ທິດທາງແຜນການເຄື່ອນໄຫວ 5 ປີ (2021-2025) ຂອງສະພາແຫ່ງຊາດ ຊຸດທີ IX, ແຜນພັດທະນາຂອງສະພາແຫ່ງຊາດດັ່ງກ່າວ ໄດ້ກຳນົດ 6 ທິດທາງລວມ, 6 ຄາດໝາຍສູ້ຊົນ, 5 ແຜນງານ 29 ໂຄງການ ແລະ 4 ມາດຕະການຈັດຕັ້ງປະຕິບັດ. ບັນດາຮາກຖານພັກ, ບັນດາກຳມາທິການ ແລະ ອົງການຈັດຕັ້ງມະຫາຊົນ ຕ້ອງໄດ້ເຊື່ອມຊຶມບັນດາເນື້ອໃນຈິດໃຈຂອງແຜນດັ່ງກ່າວ ໃຫ້ມີຄວາມເຂົ້າໃຈເລິກເຊິ່ງ ແລະ ເປັນເອກະພາບ; ຫັນບັນດາຄາດໝາຍ, ທິດທາງໜ້າທີ່ລວມ, ແຜນງານ, ໂຄງການຈຸດສຸມ ຂອງແຜນພັດທະນາຂອງສະພາແຫ່ງຊາດ ໄລຍະ 2021-2025 ໃຫ້ເປັນອັນລະອຽດ, ແທດເໝາະກັບພາລະບົດບາດ, ສິດ ແລະ ໜ້າທີ່ ແລະ ສະພາບຄວາມເປັນຈິງຂອງແຕ່ລະວຽກງານ, ສອດຄ່ອງລະຫວ່າງແຜນວຽກ, ແຜນເງິນ ແລະ ແຜນຄົນ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ ແລະ ມີປະສິດທິຜົນສູງ; ພ້ອມກັນນີ້, ກໍຕ້ອງເປັນເຈົ້າການຕິດຕາມ, ກວດກາ, ສະຫລຸບຕີລາຄາ ແລະ ຖອນຖອນບົດຮຽນເປັນປົກກະຕິ ເພື່ອສົ່ງເສີມດ້ານດີ ແລະ ປະຕິບັດນະໂຍບາຍຍ້ອງຍໍສັນລະເສີນຜູ້ທີ່ມີຜົນງານດີເດັ່ນ ໃຫ້ວ່ອງໄວ ແລະ ທັນການ; ພ້ອມນີ້, ກໍຈຳກັດ ແລະ ແກ້ໄຂປາກົດການຫຍໍ້ທໍ້ໃຫ້ທັນການ ແລະ ປະຕິບັດວິໄນຕໍ່ຜູ້ກະທຳຜິດໃຫ້ຖືກຕ້ອງ ແລະ ເດັດຂາດ.

ສະຫາຍຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ກ່າວຕື່ມວ່າ: ຄະນະນຳ ແລະ ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ ໄດ້ເປັນເຈົ້າການປະຕິບັດຕາມພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ແລະ ຜົນສຳເລັດ, ປະກອບສ່ວນເຮັດໃຫ້ສະພາແຫ່ງຊາດພວກເຮົາສາມາດປະຕິບັດພາລະບົດບາດຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ ມີຜົນສຳເລັດເປັນຢ່າງດີ. ໃນໂອກາດທີ່ມີຄວາມໝາຍສຳຄັນນີ້ອີກເທື່ອໜຶ່ງ ຂ້າພະເຈົ້າສະແດງຄວາມຍ້ອງຍໍຊົມເຊີຍບັນດາກົມກອງ ແລະ ບຸກຄົນ ທີ່ໄດ້ຮັບການຍ້ອງຍໍສັນລະເສີນໃນຄັ້ງນີ້. ສຳລັບກົມກອງ ແລະ ຜູ້ທີ່ໄດ້ຮັບການຍ້ອງຍໍຄັ້ງນີ້ ກໍຕ້ອງສືບຕໍ່ຮັກສາມູນເຊື້ອ, ເສີມຂະຫຍາຍຜົນງານດ້ານດີຂອງຕົນ, ກົມກອງ ແລະ ຜູ້ທີ່ໄດ້ຮັບໃບຊົມເຊີຍ ຫລື ຍັງບໍ່ທັນໄດ້ຮັບການຍ້ອງຍໍ ກໍສືບຕໍ່ເຝິກຝົນຫລໍ່ຫລອມ, ຮ່ຳຮຽນ ນຳເພື່ອນສະຫາຍ, ພັດທະນາຕົນເອງຂຶ້ນຕື່ມເພື່ອໃຫ້ກາຍເປັນກົມກອງ ແລະ ບຸກຄົນດີເດັ່ນ ໄດ້ຮັບໃບຍ້ອງຍໍໃນປີຕໍ່ໄປ.

(ກົງທະນູຄຳ ພິພັດເສລີ)

## ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ທອມສະນິດ**

❑ ໃນປີ 2022 ນະຄອນຫລວງວຽງຈັນ ມີແຜນປູກຕົ້ນໄມ້ໃຫ້ໄດ້ 400 ກວ່າເຮັກຕາ ໂດຍຈະສຸມໃສ່ປູກໄມ້ປະດັບຕາມແຄມທາງສວນສາທາລະນະ 5 ເຮັກຕາ, ໄມ້ເສດຖະກິດທີ່ຕະຫລາດຕ້ອງການ ເພື່ອເປັນສິນຄ້າ 300 ເຮັກຕາ ແລະ ປູກເພື່ອຟື້ນຟູປ່າຊຸດໂຊມ 100 ເຮັກຕາ ໂດຍມອບໃຫ້ 5 ຕົວເມືອງນອກ ທີ່ມີເນື້ອທີ່ປ່າໄມ້ກວມອັດຕາສ່ວນຫລາຍເປັນຜູ້ຈັດຕັ້ງປະຕິບັດ ເຊັ່ນ: ເມືອງສັງທອງ, ປາກງື່ມ, ໄຊທານີ, ຫາດຊາຍຟອງ ແລະ ນາຊາຍທອງ ມາຮອດປັດຈຸບັນ, ການກະກຽມເບ້ຍໄມ້ຕ່າງໆສຳເລັດເກືອບທັງໝົດແລ້ວ.

**ນສພ. ປະຊາຊົນ 27/05/2022**

❑ ພະຍາດໝາກສຸກລີງ ເກີດຈາກເຊື້ອຈຸລະໂລກ (ໄວຣັດ) ຕິດຕໍ່ຈາກສັດສູ່ຄົນ, ເກີດຈາກໄວຣັດ (Monkeypox) ເຊິ່ງຢູ່ໃນກຸ່ມຂອງ Orthopoxvirus ແລະ ຄອບຄົວດຽວກັບ poxviridea Monkeypox ແມ່ນມາຈາກການຄົ້ນພົບເບື້ອງຕົ້ນຂອງເຊື້ອໄວຣັດໃນລີງຢູ່ຫ້ອງທົດລອງຂອງເດນມາກໃນປີ 1958, ກໍລະນີທຳອິດຂອງມະນຸດໄດ້ຖືກພົບເຫັນຢູ່ໃນເດັກນ້ອຍໃນສາທາລະນະລັດ ປະຊາທິປະໄຕຄອງໂກ ໃນປີ 1970, ພະຍາດ Monkeypox ບໍ່ແມ່ນພະຍາດທີ່ເກີດຂຶ້ນໃໝ່ໄລຍະຜ່ານມາແມ່ນພົບຫລາຍໃນຂົງເຂດອາຟຣິກາກາງ ແລະ ອາຟຣິກາຕາເວັນຕົກ ໂດຍສະເພາະເຂດອາກາດຮ້ອນຊຸ່ມທີ່ໃກ້ກັບປ່າ; ສຳລັບເສັ້ນທາງການຕິດຕໍ່ແມ່ນການກິນຊີ້ນທີ່ປຸງແຕ່ງບໍ່ສຸກ ແລະ ຊີ້ນສັດປ່າທີ່ຕິດເຊື້ອແມ່ນເປັນປັດໄຈສ່ຽງທີ່ເປັນໄປໄດ້ພາໃຫ້ຕິດເຊື້ອ Monkeypox ເວລາຕິດເຊື້ອແມ່ນຈະຫາຍດີເອງໂດຍບໍ່ໄດ້ປິ່ນປົວ ແຕ່ອາການອາດຈະຮ້າຍແຮງໃນບາງບຸກຄົນເຊັ່ນ: ເດັກນ້ອຍ, ແມ່ຍິງຖືພາ ຫລື ຜູ້ທີ່ມີພູມຕ້ານທານຕ່ຳຍ້ອນສະພາບສຸຂະພາບອື່ນໆ ແລະ ວິທີການປ້ອງກັນແມ່ນຫລີກລ່ຽງການສຳຜັດໂດຍກົງກັບຜູ້ຕິດເຊື້ອ ຫລື ຜູ້ທີ່ມີກໍລະນີສົງໃສ.

**ນສພ. ປະເທດລາວ 30/05/2022**

❑ ປັດຈຸບັນ, ການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກ ຢູ່ ສ ເກົາຫລີ ແມ່ນຈັດຕັ້ງປະຕິບັດໂດຍຜ່ານ 2 ລະບົບ ຄື: 1. ລະບົບ Employ-ment permission system (EPS) ເປັນລະບົບໄລຍະຍາວ 3-5 ປີ ແມ່ນເຮັດວຽກໃນຂະແໜງອຸດສາໄປຫະກຳຂະໜາດນ້ອຍ ແລະ ກາງ (ໂຮງງານຕ່າງໆ) ມີຄວາມຕ້ອງການ 500-1.000 ຄົນຕໍ່ປີ ແລະ 2. ລະບົບ Seasonal Worker (SW) ເປັນລະບົບໄລຍະສັ້ນ ເຮັດວຽກຕາມລະດູການ 3-6 ເດືອນ ສ່ວນໃຫຍ່ແລ້ວແມ່ນເຮັດວຽກດ້ານກະສິກຳ ພາຍໃນເດືອນມິຖຸນານີ້ ແມ່ນມີຄວາມຕ້ອງການຫລາຍກວ່າ 1.000 ຄົນ ປັດຈຸບັນ, ສາມາດຈັດສົ່ງແຮງງານໄປເຮັດວຽກຢູ່ ສ ເກົາຫລີ ແລ້ວ ຈຳນວນທັງໝົດ 632 ຄົນ ຍິງ 19 ຄົນ.

**ນສພ. ວຽງຈັນໃໝ່ 30/05/2022**

❑ ໃນປີ 2021 ມູນຄ່າການຄ້າສອງຝ່າຍ ລາວ-ຫວຽດນາມ ສາມາດບັນລຸໄດ້ຫລາຍກວ່າ 1,37 ຕື້ໂດລາ ເພີ່ມຂຶ້ນ 33,32% ທຽບໃສ່ປີ 2020 ເຊິ່ງເປັນມູນຄ່າການຄ້າສອງຝ່າຍທີ່ສູງທີ່ສຸດໃນຮອບ 10 ປີ.

**ນສພ. ປະເທດລາວ 30/05/2022**

# ຊ່ຽວຊານທີ່ປຶກສາວຽກງານສື່ມວນຊົນ ສພຊ ມອບປຶ້ມໂຮມເລື່ອງສັ້ນ ລາຕີລ້ານແສງ



(ສພຊ) ທີ່ຫໍສະໝຸດແຫ່ງຊາດ ໃນວັນທີ 31 ພຶດສະພາ 2022 ນີ້, ທ່ານ ວິເສດ ສະແຫວງສຶກສາ ຊ່ຽວຊານທີ່ປຶກສາວຽກງານສື່ມວນຊົນ ສະພາແຫ່ງຊາດ (ສພຊ) ໄດ້ມອບປຶ້ມໂຮມເລື່ອງສັ້ນ "ລາຕີລ້ານແສງ" ໃຫ້ຫໍສະໝຸດແຫ່ງຊາດ ກ່າວຮັບໂດຍທ່ານ ນາງ ຂັນທະມາລີ ຍັງນຸວົງ ຜູ້ອຳນວຍການຫໍສະໝຸດແຫ່ງຊາດ ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ແຂກຖືກເຊີນ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ທ່ານ ວິເສດ ສະແຫວງສຶກສາ ໄດ້ໃຫ້ຮູ້ວ່າໃນການຄົ້ນຄວ້າ ແລະ ຈັດພິມປຶ້ມໂຮມເລື່ອງສັ້ນລາຕີລ້ານແສງ ເປັນການຄັດຈ້ອນເອົາເລື່ອງສັ້ນ 4 ຊຸດ ຂອງທ່ານເອງ ຄື: ປຶ້ມດອງສອງຊັ້ນ, ລຳເຊສະອື້ນ, ນິກອ້ຽງຂີ້ຕາຄວາຍ ແລະ ອຸບັດຫ້ຽມ ທີ່ຂຽນຂຶ້ນໃນລະຫວ່າງ ປີ 1982-2002 ແລະ ພ້ອມທັງໄດ້ກ່າວມອບປຶ້ມດັ່ງກ່າວ ຈຳນວນ 2.500 ຫົວ ມູນຄ່າ 87 ລ້ານກວ່າກີບ ໃຫ້ຫໍສະໝຸດແຫ່ງຊາດ.

ທ່ານ ນາງ ຂັນທະມາລີ ຍັງນຸວົງ ໄດ້ສະແດງຄວາມຂອບໃຈຕໍ່ທ່ານ ວິເສດ ສະແຫວງສຶກສາ ທີ່ໄດ້ນຳເອົາປຶ້ມລາຕີລ້ານແສງ ມາມອບໃຫ້ຫໍສະໝຸດແຫ່ງຊາດໃນຄັ້ງນີ້ ແລະ ໄລຍະຜ່ານມາ ເຊິ່ງປຶ້ມທີ່ໄດ້ຮັບແມ່ນຈະເອົາໄວ້ຫໍສະໝຸດແຫ່ງຊາດ ຈຳນວນໜຶ່ງ ແລະ ຈະນຳໄປແຈກຢາຍໃຫ້ບັນດາຫໍສະໝຸດຕ່າງໆ ຢູ່ບັນດາແຂວງທົ່ວປະເທດ ແລະ ບັນດາໂຮງຮຽນທີ່ຢູ່ໃນເປົ້າໝາຍ ເພື່ອໃຫ້ນັກຄົ້ນຄວ້າ, ນັກຮຽນ, ນັກສຶກສາ ໄດ້ອ່ານ ແລະ ຄົ້ນຄວ້າຮ່ຳຮຽນ ໃຫ້ເກີດປະໂຫຍດສູງສຸດ.







## ສຳເລັດ...

ໝາຍ, ສາເຫດທີ່ພາໃຫ້ມີດ້ານດີ, ດ້ານອ່ອນ, ບົດຮຽນທີ່ຖອດຖອນໄດ້ ແລະ ຂໍ້ສະເໜີ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

ໃນໂອກາດນີ້, ທ່ານຮອງປະທານກຳມາທິການກົດໝາຍ ໄດ້ມີຄຳເຫັນຕໍ່ການປະເມີນການປະຕິບັດກົດໝາຍດັ່ງກ່າວ ເຊິ່ງທ່ານໄດ້ຍົກໃຫ້ເຫັນການປະຕິບັດນະໂຍບາຍ ແລະ ກົນໄກຂອງການບໍລິການການລົງທຶນປະຕູດຽວ ໃຫ້ລວມສູນ, ຂອດການປະສານສົມທົບ ລະຫວ່າງຂະແໜງການສູນກາງດ້ວຍກັນ ແລະ ສູນກາງກັບທ້ອງຖິ່ນ, ກົນໄກການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຢູ່ເຂດເສດຖະກິດພິເສດ, ການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ແຕ່ສູນກາງລົງຮອດຂັ້ນພື້ນຖານບ້ານ ໃຫ້ທົ່ວເຖິງໃນຖັນແຖວນັກທຸລະກິດ, ນັກລົງທຶນ ເພື່ອສ້າງຄວາມຮັບຮູ້, ຄວາມເຂົ້າໃຈຕໍ່ເນື້ອໃນຂອງກົດໝາຍ ແລະ ການປັບປຸງກົດໝາຍດັ່ງກ່າວໃນຕໍ່ໜ້າ ປະກອບສ່ວນໃນການພັດທະນາດ້ານເສດຖະກິດ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ.

( ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ )

## ຊຸກຍູ້...

ທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ແລະ ທ່ານ ອິນປອນ ມະນີແສງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງແຂວງວຽງຈັນ ທັງເປັນປະທານຄະນະກຳມະການວັດທະນະທຳ-ສັງຄົມ ພ້ອມດ້ວຍຄະນະ.

ການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງການລາຍງານຫຍໍ້ຈາກອຳນາດການປົກຄອງເມືອງວັງວຽງ ແລະ ຜູ້ປະກອບການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດແຜນການເປີດເຂດທ່ອງທ່ຽວສີຂຽວໄລຍະຜ່ານມາ; ພ້ອມກັນນັ້ນ, ຄະນະ ໄດ້ລົງກວດກາຕົວຈິງກ່ຽວກັບມາດຕະຖານ, ການບໍລິການຕາມສະຖານທີ່ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ສະຖານທີ່ທ່ອງທ່ຽວຈຳນວນໜຶ່ງ; ຈາກນັ້ນ, ໄດ້ເຄື່ອນໄຫວຢ້ຽມຢາມສະຖານທີ່ຜະລິດຕະພັນຫັດຖະກຳຈັກສານ ຢູ່ບ້ານນາງຍາງ ເມືອງໂພນໂຮງ ແລະ ຮັບຟັງການລາຍງານຫຍໍ້ກ່ຽວກັບການປັບປຸງແຫລ່ງທ່ອງທ່ຽວຢູ່ອ່າງນ້ຳງື່ມ ເມືອງແກ້ວອຸດົມ ແລະ ສືບຕໍ່ເຄື່ອນໄຫວຢູ່ເມືອງທຸລະຄົມ ເພື່ອຢ້ຽມຊົມຜະລິດຕະພັນກະສິກຳສະອາດທີ່ຕິດພັນກັບການທ່ອງທ່ຽວ ໃນການຕ້ອນຮັບນັກທ່ອງທ່ຽວ ກໍຄືແນວທາງຟື້ນຟູການທ່ອງທ່ຽວຂອງ ສປປລາວ ສຳລັບປີ 2021-2025.

## ສອງອົງການ...

ການຫົວໜ້າກົມຄຳຮ້ອງຂໍຄວາມເປັນທຳ ພ້ອມດ້ວຍພາກສ່ວນກ່ຽວ.

ເຄື່ອງທີ່ນຳມາມອບໃນຄັ້ງນີ້, ປະກອບມີເຄື່ອງດື່ມສະໝູນໄພ ຈຳນວນ 500 ຕຸກ ລວມມູນຄ່າ 4.000.000 ກີບ; ຈາກນັ້ນ, ບໍລິສັດ ສີຫາວົງ ກໍ່ສ້າງ ຈຳກັດ ໄດ້ນຳເຄື່ອງໃຊ້ພາຍໃນຄົວເຮືອນ ປະເພດແຟບ ຈຳນວນ 20 ແກັດ ລວມມູນຄ່າ 8.000.000 ກີບ ຕື່ມອີກ.

(ນາງ ໄຊໂສພາພອນ ມິ່ງມຸງຄຸນ)

## ໄພແລ້ງ...

ປັດຈຸບັນນີ້, ໂລກເຮົາໄດ້ສູນເສຍພື້ນທີ່ປ່າໄມ້ໜຶ່ງໃນສາມໄປແລ້ວ ເຊິ່ງຜົນກະທົບຈາກການຕັດຕົ້ນໄມ້ຢ່າງໜັກໜ່ວງຫລວງຫລາຍ ແມ່ນຫລັງຊຸມປີ ຄສ.1900 ເພາະເຫັນແກ່ການປູກພືດເສດຖະກິດ ແລະ ສ້າງພື້ນທີ່ລ້ຽງສັດ ຈຶ່ງພາກັນຕັດຖາງປ່າໄມ້ໃຫ້ແປນ ຫລື ບໍ່ດັ່ງນັ້ນ, ກໍຕັດເອົາໄມ້ສ້າງເສດຖະກິດຄ້າຂາຍ, ສ້າງທີ່ຢູ່ອາໃສຈົນຂາດຄວາມສົມດຸນ ຍົກຕົວຢ່າງ: ຢູ່ປະເທດອິນໂດເນເຊຍ ເຄີຍຕັດຖາງປ່າໄມ້ເພື່ອປູກຕົ້ນປາມນ້ຳມັນ...; ນັກວິທະຍາສາດດ້ານປ່າໄມ້ ໄດ້ມີຄວາມເປັນຫວ່ງກ່ຽວກັບບັນຫາໄຟປ່າ, ພະຍຸພັດຖະຫລົ່ມປ່າໄມ້ ແລະ ສັດຕູພືດ... ເຊິ່ງພາໃຫ້ເສຍປ່າໄມ້ ນຳມາເຊິ່ງອາກາດຮ້ອນ ແລະ ໄພແລ້ງ.

ຜູ້ຂຽນຄິດວ່າ: ຖ້າພວກເຮົາຫວນຄືນອາດີດ ກໍຈະເຫັນພູມປັນຍາບັນພະບຸລຸດ ທີ່ນຳໃຊ້ໄມ້ ຫລື ປ່າໄມ້ຢ່າງຖືກວິທີ ເພາະພວກເຂົາຮູ້ຈັກສ້າງຄວາມສົມດຸນຢູ່ກັບທຳມະຊາດ ຍົກຕົວຢ່າງ: ການຫາປາ ເຖິງຍາມປາໄຂ່ເຂົາຈະບໍ່ເອົາ ແລະ ຍັງມີຂໍ້ກຳນົດຮັກສາປະຕິບັດສືບທຳເປັນປະຈຳ ເຊິ່ງຈະເຫັນໄດ້ບົດບາດອັນນີ້ຢູ່ໃນຊົນນະບົດ ແຕ່ຖ້າວ່າເຮົາຫລົງຕາມກະແສບໍລິໂພກນິຍົມທີ່ໄຂ່ວຄວ້າສ້າງແຕ່ລາຍໄດ້ຝ່າຍດຽວ ໂດຍບໍ່ຄຳນຶງເຖິງຄວາມສົມດຸນຂອງທຳມະຊາດ ກໍຈະເຮັດໃຫ້ຜືນປ່າສູນເສຍ, ສັດຕ່າງໆ ກໍຈະສູນພັນ; ສະນັ້ນ, ພວກເຮົາຄວນສົ່ງເສີມການປູນຕົ້ນໄມ້ໃຫ້ກາຍເປັນນິໄສ ເຮັດໃຫ້ເນື້ອທີ່ປ່າປົກຄຸມຫລາຍຂຶ້ນ.

## ຊົມເຊີຍ...

ການມາຢ້ຽມຢາມສັນຖະວະໄມຕີ ສປປລາວ ຢ່າງເປັນທາງການຂອງສະຫາຍ ເວືອງ ດິ່ງ ເຫວ ພ້ອມດ້ວຍຄະນະ ໃນຄັ້ງນີ້ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ທີ່ມີມູນເຊື້ອຍາວນານ ໃຫ້ນັບມື້ແຕກດອກອອກຜົນງອກງາມຍິ່ງໆຂຶ້ນ ໂດຍສະເພາະແມ່ນການຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດ ກໍຄືລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດ ຫວຽດນາມ ເຊິ່ງປີນີ້ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດເຮົາກຳລັງພ້ອມກັນກະກຽມສະເຫລີມສະຫລອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2022, ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ຄົບຮອບ 45 ປີ (18/7/1977-18/7/2022) ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ (5/9/1962-5/9/2022) ທີ່ກຳລັງດຳເນີນໄປດ້ວຍບັນຍາກາດຄຶກຄື້ນມ່ວນຊື່ນ, ມີເນື້ອໃນອຸດົມສົມບູນກວ້າງຂວາງ, ເລິກເຊິ່ງ ແລະ ໜັກແໜ້ນ.

ຄະນະຜູ້ແທນຂັ້ນສູງ ຂອງສອງສະພາແຫ່ງຊາດ ລາວ-ຫວຽດນາມ ໄດ້ພົບປະສອງຝ່າຍ ເພື່ອຮ່ວມກັນຕີລາຄາຄືນການພົວພັນ ແລະ ການຮ່ວມມືລະຫວ່າງສອງປະເທດ ກໍຄື ລະຫວ່າງສອງສະພາແຫ່ງຊາດ ລາວ-ຫວຽດນາມ ໃນໄລຍະຜ່ານມາ ແລະ ປຶກສາຫາລືທິດທາງແຜນການພົວພັນຮ່ວມມືໃນຕໍ່ໜ້າ ໂດຍໄດ້ເຊັນບົດບັນທຶກການຮ່ວມມື ແລະ ແລກປ່ຽນເອກະສານບົດບັນທຶກການຮ່ວມມື 4 ສະບັບ ໃນການສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍການຮ່ວມມືໃຫ້ນັບມື້ເຂົ້າສູ່ລວງເລິກ. ປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມຂອບໃຈຕໍ່ສະຫາຍປະທານສະພາແຫ່ງຊາດຫວຽດນາມ ທີ່ຈະໃຫ້ການຮ່ວມມື ແລະ ສະໜັບສະໜູນແກ່ສະພາແຫ່ງຊາດລາວ ໃນການເປັນເຈົ້າພາບຈັດກອງປະຊຸມສະພາແຫ່ງຊາດ ຂອງ 3 ປະເທດ ກຳປູເຈຍ-ລາວ-ຫວຽດນາມ (CLV) ໃນປີ 2023 ແລະ ກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ໃນປີ 2024 ທີ່ຈະມາເຖິງ.

ໂອກາດດັ່ງກ່າວ, ສອງປະທານສະພາແຫ່ງຊາດ ລາວ-ຫວຽດນາມ ໄດ້ຮ່ວມກັນເປັນສັກຂີພິຍານ ການມອບຫລຽນກາທີ່ລະນຶກ ຈາກຫ້ອງວ່າການສະພາແຫ່ງຊາດຫວຽດນາມ ມອບໃຫ້ແກ່ຄະນະເລຂາທິການສະພາແຫ່ງຊາດລາວ ແລະ ໄດ້ຮ່ວມກັນປູກຕົ້ນໄມ້ເປັນທີ່ລະນຶກ ທີ່ເດີ່ນຫຍ້າຂ້າງຫໍສະພາແຫ່ງຊາດ. ພ້ອມກັນນີ້, ຄະນະຜູ້ແທນຂອງສອງສະພາແຫ່ງຊາດ ລາວ-ຫວຽດນາມ ກໍໄດ້ຮ່ວມກັນສຳມະນາໃນຫົວຂໍ້ "ກົນໄກ, ນະໂຍບາຍ ເພື່ອຟື້ນຟູ ແລະ ພັດທະນາເສດຖະກິດ-ສັງຄົມ" ພາຍຫລັງການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປລາວ ແລະ ສສ.ຫວຽດນາມ ເຊິ່ງເປັນໂອກາດອັນດີໃນການແລກປ່ຽນບົດຮຽນ, ປະສົບການ, ຄຳຄິດຄຳເຫັນ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງອົງການຈັດຕັ້ງພັກ, ລັດ ກໍຄືສະພາແຫ່ງຊາດ ເພື່ອຟື້ນຟູ ແລະ ພັດທະນາເສດຖະກິດ-ສັງຄົມ ພາຍຫລັງທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19, ໄດ້ເຂົ້າວາງພວງມາລາທີ່ອະນຸສາວະລີນັກຮົບນິລະນາມ ທີ່ນະຄອນຫລວງວຽງຈັນ ເພື່ອສະແດງເຖິງຄວາມເຄົາລົບຮັກ, ຄວາມກະຕັນຍູຮູ້ບຸນຄຸນ ເຖິງຄຸນງາມຄວາມດີ ແລະ ນ້ຳໃຈຕໍ່ສູ້ ຢ່າງພິລະອາດຫານ, ບໍ່ຍອມຈຳນົນຂອງບັນດານັກຮົບປະຕິວັດລາວທີ່ໄດ້ເຄີຍຮ່ວມສຳພັນຮົບກັບອ້າຍນ້ອງທະຫານຫວຽດນາມ ໃນຂະບວນການຕໍ່ສູ້ປະຕິວັດສາມຊາດອິນດູຈີນ ເວົ້າລວມ, ເວົ້າສະເພາະແມ່ນການຮ່ວມສຳພັນຮົບຮ່ວມຊຸມຄອງດຽວກັນ ເປັນຕາຍຮ່ວມກັນ ຕ້ານສັດຕູລວມໂຕດຽວກັນ ໃນການປົດປ່ອຍຊາດຍາດເອົາເອກະລາດມາໃຫ້ປະຊາຊົນຂອງແຕ່ລະປະເທດ ລາວ-ຫວຽດນາມ. ເຂົ້າຮ່ວມພິທີເປີດໂຄງການກໍ່ສ້າງສວນສາທາລະນະມິດຕະພາບ ລາວ-ຫວຽດນາມ ທີ່ບ້ານດົງໝາກຄາຍ ເມືອງໄຊທານີ ນະຄອນຫລວງວຽງຈັນ ເຊິ່ງສ່ອງແສງໃຫ້ເຫັນເອກະລັກ, ວັດທະນະທຳ, ມູນເຊື້ອອັນດີງາມຂອງການພົວພັນຂອງສອງຊາດ, ເປັນສັນຍາລັກແຫ່ງການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ຂອງສອງຊາດ ລາວ-ຫວຽດນາມ.

ນອກນີ້, ບັນດາກຳມາທິການພາຍໃນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ບັນດາກະຊວງ ແລະ ອົງການກ່ຽວຂ້ອງ ກໍສືບຕໍ່ພົບປະເຮັດວຽກຮ່ວມກັນ ເພື່ອຕີລາຄາຄືນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ກຳນົດທິດທາງໃນຕໍ່ໜ້າ.

ໃນໂອກາດມາຢ້ຽມຢາມສັນຖະວະໄມຕີ ຢູ່ ສປປລາວ ຄັ້ງນີ້. ສະຫາຍ ເວື່ອງ ດິ່ງ ເຫວ ພ້ອມດ້ວຍຄະນະ ກໍໄດ້ເຂົ້າຢ້ຽມຂ່ຳນັບສະຫາຍທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ປະທານປະເທດ ແລະ ສະຫາຍ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ ແຫ່ງ ສປປລາວ ເຊິ່ງເປັນການຮັດແໜ້ນການຮ່ວມມື, ເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດແລະປະຊາຊົນສອງຊາດລາວ-ຫວຽດນາມເວົ້າລວມ, ເວົ້າສະເພາະລະຫວ່າງ ສອງສະພາແຫ່ງຊາດ ຂອງສອງປະເທດໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ ໂດຍສະເພາະການມາຢ້ຽມຢາມຄັ້ງນີ້ແມ່ນຢູ່ໃນບັນຍາກາດທີ່ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດກຳລັງກະກຽມສະເຫລີມສະຫລອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ໃຫ້ປະກົດຜົນສຳເລັດຕາມລະດັບຄາດໝາຍ.

ໃນໂອກາດດຽວກັນ, ສະຫາຍ ເວືອງ ດິ່ງ ເຫວ ກໍໄດ້ກ່າວສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນຂອງສະຫາຍປະທານປະເທດ, ນາຍົກລັດຖະມົນຕີ ແລະ ພາກສ່ວນກ່ຽວຂ້ອງຂອງ ສປປລາວ ໃນຄັ້ງນີ້, ພ້ອມທັງແຈ້ງໃຫ້ຊາບກ່ຽວກັບຈຸດປະສົງ ແລະ ຜົນສຳເລັດ ໃນການຢ້ຽມຢາມ ແລະ ເຮັດວຽກຮ່ວມກັບສະພາແຫ່ງຊາດລາວ, ລວມທັງສະພາບການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ສະພາບການຂອງພາກພື້ນ ແລະ ສາກົນ ທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ.

ຂໍສະແດງຄວາມຊົມເຊີຍຢ່າງສຸດໃຈຕໍ່ຜົນສຳເລັດການຢ້ຽມຢາມສັນຖະວະໄມຕີຢ່າງເປັນທາງການ ຂອງສະຫາຍປະທານສະພາແຫ່ງຊາດຫວຽດນາມ ກໍຄືການຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງສອງຊາດ ລາວ-ຫວຽດນາມ.

# ປະທານ ສພຂ ສາລະວັນ ຊຸກຍູ້ການຈັດຕັ້ງ ປະຕິບັດສອງວາລະແຫ່ງຊາດ ຢູ່ 4 ເມືອງ



(ສພຊ) ໃນລະຫວ່າງວັນທີ 17-19 ພຶດສະພາ 2022 ທ່ານ ສີເຣັງ ທອນສິມບັດ ປະທານສະພາປະຊາຊົນແຂວງ (ສພຂ) ສາລະວັນ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ຕາງໜ້າຈາກພະແນກການທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ຊຸດທີ II, ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ຢູ່ 4 ເມືອງ ຄື: ສະໜ້ວຍ, ຕະໂອ້ຍ, ຕຸ້ມລານ ແລະ ສາລະວັນ; ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມກອງປະຊຸມຂອງເລຂາພັກເມືອງ, ເຈົ້າເມືອງ, ຄະນະປະຈຳພັກເມືອງ, ອົງການປົກຄອງເມືອງຂອງແຕ່ລະເມືອງ ເຂົ້າຮ່ວມ. ການເຄື່ອນໄຫວໃນແຕ່ລະເມືອງ, ບັນດາທ່ານເລຂາພັກເມືອງ ໄດ້ຂຶ້ນລາຍງານຜົນຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງເມືອງ ແລະ ຜົນຂອງການຈັດຕັ້ງຜັນຂະຫຍາຍສອງວາລະແຫ່ງຊາດ ໂດຍຫຍໍ້; ພ້ອມນັ້ນ, ກໍໄດ້ຮັບຟັງການລາຍງານຈາກຕາງໜ້າຫ້ອງການເມືອງ ແລະ ພະແນກການທີ່ກ່ຽວຂ້ອງຕາມຂົງເຂດຄວາມຮັບຜິດຊອບ.

ທ່ານ ສີເຣັງ ທອນສິມບັດ ໄດ້ມີຄຳເຫັນເນັ້ນໃຫ້ແຕ່ລະເມືອງ ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ໃນ 6 ເດືອນຕໍ່ໜ້າ ໂດຍສະເພາະການຈັດເກັບລາຍຮັບເຂົ້າງົບປະມານໃຫ້ບັນລຸ, ຫັນການປູກຝັງການຜະລິດເປັນສິນຄ້າໃຫ້ຫລາຍເພື່ອທົດແທນການນຳເຂົ້າ, ສະເໜີໃຫ້ທ່ານເຈົ້າເມືອງຕ້ອງຊີ້ນຳໃຫ້ແຕ່ລະຂະແໜງການທີ່ຂຶ້ນກັບ ຮີບຮ້ອນເອົາໃຈໃສ່ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດດີຂຶ້ນເປັນກ້າວໆ; ສຳລັບວາລະແຫ່ງຊາດ ໃຫ້ຖືເປັນສຳຄັນໂດຍມອບໃຫ້ແຕ່ລະພາກສ່ວນຂັ້ນເມືອງຂັ້ນບ້ານ ສືບຕໍ່ຜັນຂະຫຍາຍສອງວາລະແຫ່ງຊາດໃຫ້ເຂົ້າສູ່ລວງເລິກ ພ້ອມທັງຄົ້ນຄວ້າກຳນົດເປັນແຜນວຽກ, ແຜນຄົນ, ແຜນງົບປະມານໃຫ້ລະອຽດ ແລະ ເປັນລະບົບ; ມອບໃຫ້ ປກສ ເມືອງ ເປັນໃຈກາງລາຍງານປະຈຳວັນ ໃຫ້ທ່ານເຈົ້າເມືອງ, ຄະນະປະຈຳພັກເມືອງ ຮັບຊາບຢ່າງເປັນປົກກະຕິຕໍ່ກັບການແກ້ໄຂບັນຫາຢາເສບຕິດ.

ຈຸດປະສົງໃນການເຄື່ອນໄຫວເຮັດວຽກຄັ້ງນີ້, ກໍເພື່ອເປັນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຕິດຕາມກວດກາຂອງ ສພຊ ແລະ ສພຂ, ເປັນການເກັບກຳຂໍ້ມູນຮອງຮັບໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງທີ 14 ໃນການກະກຽມເຂົ້າຮ່ວມກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງ ສພຊ ຊຸດທີ IX ທີ່ຈະໄຂຂຶ້ນໃນຕົ້ນເດືອນມິຖຸນາທີ່ຈະມາເຖິງນີ້.

(ດີລຳພົນ ພົມມະຈັນ)

# ຕິດຕາມກວດກາການຈັດຕັ້ງປະຕິບັດ ວຽກງານຂົງເຂດຍຸຕິທຳ ແລະ ປກຊ-ປກສ



(ສພຊ) ວັນທີ 19-20 ພຶດສະພາ 2022 ທ່ານ ຈັນທະສຸລິນ ໝັ້ນປະດິດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3 ແຂວງຫລວງນ້ຳທາ, ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານໃນຂົງເຂດຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ເມືອງສິງ ແລະ ເມືອງຫລວງນ້ຳທາ ແຂວງຫລວງນ້ຳທາ ໂດຍການເຂົ້າຮ່ວມຂອງຄະນະນຳຂອງເມືອງ, ຄະນະປະຈຳພັກເມືອງ, ມີບັນດາທ່ານສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການຍຸຕິທຳ, ສານປະຊາຊົນເຂດ, ອົງການໄອຍະການປະຊາຊົນເຂດ, ສອງກອງບັນຊາການປ້ອງກັນຊາດ-ປ້ອງການຄວາມສະຫງົບເມືອງສິງ ແລະ ເມືອງຫລວງນ້ຳທາ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ພ້ອມທັງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີຂອງແຕ່ລະພາກສ່ວນ. ພ້ອມນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນແລກປ່ຽນປະກອບຄຳເຫັນຢ່າງກົງໄປກົງມາຕໍ່ກັບການປະຕິບັດໜ້າທີ່ໃນໄລຍະຜ່ານມາຂອງແຕ່ລະພາກສ່ວນ. ທັງນີ້, ກໍເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານສະດວກວ່ອງໄວ ແລະ ມີຄຸນນະພາບຂຶ້ນກວ່າເກົ່າ.

ໃນຕອນທ້າຍ, ປະທານກອງປະຊຸມຍັງມີຄຳເຫັນໂອ້ລົມ ແລະ ເນັ້ນໜັກ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ພ້ອມທັງເນັ້ນໜັກໃຫ້ອົງການທີ່ເຮັດວຽກງານຍຸຕິທຳ ຕ້ອງເພີ່ມທະວີຄວາມເປັນເອກະພາບ, ເຄົາລົບສິດ ແລະ ໜ້າທີ່ຕາມການແບ່ງງານ ພ້ອມທັງປະສານສົມທົບກັນຢ່າງແໜ້ນແຟ້ນ, ປຶກສາຫາລື, ມີຄວາມເປັນເອກະພາບກັນບົນພື້ນຖານກົດໝາຍ ແລະ ຮັບປະກັນການປະສານສົມທົບ ລະຫວ່າງອົງການທີ່ເຮັດວຽກຍຸຕິທຳ ເພື່ອເຮັດໃຫ້ການດຳເນີນຄະດີ, ການຕັດສິນຄະດີ, ການປະຕິບັດຄຳຕັດສິນຂອງສານ ຖືກຕ້ອງຕາມກົດໝາຍເປັນໄປຕາມຂະບວນຍຸຕິທຳ.

(ນັກຂ່າວ ສພຂ ຫລວງນ້ຳທາ)



# ປະທານ ສພຂ ຄຳມ່ວນ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍຢູ່ 5 ເມືອງ



(ສພຊ) ໃນລະຫວ່າງວັນທີ 16-20 ພຶດສະພາ 2022 ທ່ານ ບຸນມີ ພົມມະສອນ ປະທານສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ແລະ ທ່ານ ຄຳສຸກ ວັນທະວົງສາ ປະທານຄະນະກຳມະການ ຍຸຕິທຳ ແລະ ປກຊ-ປກສ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມກວດກາ, ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍໃນຂົງເຂດ ຕຸລາການ ແລະ ຍຸຕິທຳ ໂດຍຕິດພັນກັບວຽກງານຊຸກຍູ້ການປັບປຸງຄະນະຊີ້ນຳ ແລະ ກອງເລຂາຊ່ວຍວຽກ ຄະນະປົກປ້ອງລະບຽບກົດໝາຍຂັ້ນເມືອງ ຢູ່ 5 ເມືອງຄື: ຫີນບູນ, ຄູນຄຳ, ນາກາຍ, ຍົມມະລາດ ແລະ ມະຫາໄຊ, ໂດຍການຕ້ອນຮັບຂອງບັນດາເຈົ້າເມືອງ-ຮອງເຈົ້າເມືອງ, ຄະນະປະຈຳພັກເມືອງ, ມີຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ, ຄະນະອົງການກວດກາລັດ, ຄະນະກອງບັນຊາການ ປກຊ-ປກສ, ຫົວໜ້າ-ຮອງຫົວໜ້າຫ້ອງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນໂອກາດເຄື່ອນໄຫວໃນຄັ້ງນີ້, ຄະນະໄດ້ຮັບຟັງການລາຍງານຂອງເຈົ້າເມືອງແຕ່ລະເມືອງ, ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ແລະ ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ການແກ້ບັນຫາເສດຖະກິດ-ການເງິນ, ການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ຂັ້ນເມືອງ, ວຽກງານຂອງບັນດາຫ້ອງການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຜ່ານມາ ເປັນຕົ້ນ: ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍໃນຂົງເຂດຍຸຕິທຳ ໂດຍສະເພາະວຽກງານຂອງຫ້ອງການຍຸຕິທຳ, ເຈົ້າໜ້າທີ່ ປກສ ເມືອງ, ວຽກງານຂອງອົງການໄອຍະການປະຊາຊົນປະຈຳເມືອງ. ຈາກນັ້ນ, ຜູ້ເຂົ້າກອງປະຊຸມໄດ້ມີການແລກປ່ຽນຄຳຄິດຄຳເຫັນ ແລະ ມີຄຳຖາມເຈາະຈີ້ມບາງບັນຫາທີ່ສຳຄັນຕໍ່ບັນດາຫ້ອງການດ້ວຍພາວະວິໄສຢ່າງກົງໄປກົງມາເປັນຂໍ້ມູນອັນລະອຽດເພື່ອສືບຕໍ່ຈັດຕັ້ງປະຕິບັດໃຫ້ດີຂຶ້ນເປັນກ້າວໆ, ພ້ອມນັ້ນ, ຍັງໄດ້ຮັບຟັງ ຄຳແນະນຳຂອງຄະນະປະຈຳພັກແຂວງ ສະບັບເລກທີ 10/ຄປຈ.ຄມ, ລົງວັນທີ 10 ພະຈິກ 2022 ກ່ຽວກັບການແຕ່ງຕັ້ງຄະນະຊີ້ນຳ ແລະ ກອງເລຂາຊ່ວຍວຽກຄະນະປະສານງານປົກປ້ອງລະບຽບກົດໝາຍຂັ້ນແຂວງ, ຂັ້ນເມືອງຊຸດໃໝ່, ຮ່າງມະຕິວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ກອງເລຂາຊ່ວຍວຽກຄະນະປະສານງານປົກປ້ອງລະບຽບກົດໝາຍຂັ້ນເມືອງ, ຄຳແນະນຳກ່ຽວກັບການແກ້ໄຂຄຳຮ້ອງທຸກຂັ້ນເມືອງ-ຂັ້ນບ້ານ ແລະ ເອກະສານ ອື່ນໆທີ່ກ່ຽວຂ້ອງ.

ໃນຕອນທ້າຍ, ກອງປະຊຸມ ທ່ານ ບຸນມີ ພົມມະສອນ ໄດ້ມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳຕໍ່ອົງການປົກຄອງເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງວ່າ: ຕໍ່ກັບບັນຫາການພັດທະນາເສດຖະກິດ-ສັງຄົມຂອງເມືອງ ແລະ ການເກັບລາຍຮັບເຂົ້າງົບປະມານ ໃຫ້ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ວາງໄວ້ໃຫ້ສຳເລັດ; ຕໍ່ກັບສະພາບການລະບາດຂອງເຊື້ອພະຍາດໂຄວິດ-19 ທີ່ສົ່ງຜົນກະທົບສ້າງຄວາມເສຍຫາຍໃຫ້ແກ່ເສດຖະກິດຂອງປະຊາຊົນ ກໍຄືຂອງລັດ ແລະ ສືບຕໍ່ການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການປະຕິບັດທິດທາງ ແຜນການຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ຄຳແນະນຳ ການຈັດຕັ້ງປະຕິບັດທິດທາງ ແຜນການຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ 2021-2023 ສືບຕໍ່ຊີ້ນຳທຸກຂະແໜງການ ຢູ່ຂັ້ນເມືອງໃນການເຄື່ອນໄຫວ ປະຕິບັດພາລະບົດບາດ ເປັນຕົ້ນແມ່ນການຄຸ້ມຄອງເກັບລາຍຮັບ ຂອງຖານລາຍຮັບ ຢູ່ພາຍໃນເມືອງໃຫ້ລະອຽດ ຈະແຈ້ງ ແລະ ຄົບຖ້ວນ ເພື່ອເຮັດໃຫ້ລາຍຮັບງົບປະມານຂອງເມືອງເພີ່ມສູງຂຶ້ນເປັນກ້າວໆ. ທ່ານປະທານ ສພຂ ຍັງເນັ້ນໜັກໃຫ້ຄະນະຊີ້ນຳ ແລະ ກອງເລຂາຊ່ວຍວຽກຄະນະປະສານງານປົກປ້ອງກົດໝາຍຂັ້ນເມືອງໃຫ້ເອົາໃຈໃສ່ປົກປ້ອງສິດຜົນປະໂຫຍດຂອງລັດ, ຂອງສັງຄົມ, ຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ເປັນເຈົ້າການໃນການປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ວຽກງານຍຸຕິທຳຕັ້ງໜ້າໂຄສະນາເຜີຍແຜ່ກົດໝາຍ, ສຶກສາອົບຮົມແກ່ພົນລະເມືອງຮັບຮູ້ເຂົ້າໃຈ, ມີສະຕິເຄົາລົບກົດໝາຍສູງຂຶ້ນ.

(ເອື້ອ ມະໂນສິງ)



# ມອບໃບຍັ້ງຢືນ ແລະ ໃບຍ້ອງຍໍໃຫ້ 3 ອົງການຈັດຕັ້ງມະຫາຊົນ ສພຂ ຊຽງຂວາງ



(ສພຊ) ໃນວັນທີ 19 ພຶດສະພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ມີພິທີມອບຮັບໃບຍັ້ງຢືນ, ໃບຍ້ອຍໍຂອງໜ່ວຍສະຫະພັນແມ່ຍິງ 3 ດີ, ຊາວໜຸ່ມ 4 ບຸກ ແລະ 5 ເປັນເຈົ້າກຳມະບານ ໂດຍການເປັນປະທານຂອງທ່ານ ບຸນໂຮມ ເທດທານີ ປະທານ ສພຂ ຊຽງຂວາງ, ເຂົ້າຮ່ວມມີເລຂາໜ່ວຍພັກ ສພຂ, 3 ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ຄະນະໜ່ວຍຂອງ 3 ອົງການຈັດຕັ້ງມະຫາຊົນ ສພຂ, ແລະ ສະມາຊິກຂອງ 3 ອົງການຈັດຕັ້ງມະຫາຊົນພາຍໃນ ສພຂ.

ໃນພິທີ ທ່ານ ນາງ ບຸນແພງ ບັນທະວົງ ປະທານໜ່ວຍສະຫະພັນແມ່ຍິງ ສພຂ, ຕ່າງໜ້າໃຫ້ 3 ອົງການຈັດຕັ້ງມະຫາຊົນ ສພຂ ຜ່ານບົດສະຫລຸບຂໍ້ແຂ່ງຂັນແມ່ຍິງ 3 ດີ, ຊາວໜຸ່ມ 4 ບຸກ, ກຳມະບານ 5 ເປັນເຈົ້າ ປະຈຳປີ 2021 ແລະ ວາງທິດທາງແຜນການ ປະຈຳປີ 2022 ເຊິ່ງໃນໄລຍະຜ່ານມາ 3 ອົງການຕັ້ງມະຫາຊົນໄດ້ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ, 4 ບຸກ ແລະ 5 ເປັນເຈົ້າ ໄດ້ຈັດຕັ້ງປະຕິບັດຂໍ້ແຂ່ງຂັນຂອງຕົນຕາມແຕ່ລະບາດກ້າວ ແລະ ຂັ້ນຕອນຕາມຄຳແນະນຳຂອງຂັ້ນເທິງ ໂດຍຕິດພັນກັບວຽກງານສຶກສາອົບຮົມດ້ານການເມືອງແນວຄິດ ໃຫ້ສະມາຊິກ 3 ອົງການຈັດຕັ້ງມະຫາຊົນ ໂດຍເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ບັນດານິຕິກຳ, ເອົາໃຈໃສ່ປະຕິບັດວຽກງານຕາມຄວາມຮັບຜິດຊອບຂອງຕົນ ແລະ ທິດທາງໃນຕໍ່ໜ້າຈະສືບຕໍ່ສຶກສາອົບຮົມດ້ານການເມືອງແນວຄິດໃຫ້ສະມາຊິກ 3 ອົງການຈັດຕັ້ງມະຫາຊົນ, ສືບຕໍ່ຈັດຕັ້ງປະຕິບັດຂໍ້ແຂ່ງຂັ້ນ 3 ດີ, 4 ບຸກ ແລະ 5 ເປັນເຈົ້າ ໃຫ້ໄດ້ດີກວ່າເກົ່າ ພ້ອມທັງຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ. ນອກນັ້ນ, ຍັງໄດ້ຜ່ານຂໍ້ຕົກລົງມອບໃບຍັ້ງຢືນໜ່ວຍແມ່ຍິງ 3 ດີ, ໜ່ວຍຊາວໜຸ່ມ 4 ບຸກ ແລະ ໜ່ວຍກຳມະບານ 5 ເປັນເຈົ້າ ແລະ ມອບໃບຍ້ອງຍໍປະເພດດີໃຫ້ແກ່ສະມາຊິກຊາວໜຸ່ມ ສພຂ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນວຽກງານຂອງຊາວໜຸ່ມຈຳນວນ 29 ສະຫາຍ, ຍິງ 15 ສະຫາຍ.

ໃນພິທີ ທ່ານ ບຸນໂຮມ ເທດທານີ ໄດ້ຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ 3 ອົງການຈັດຕັ້ງມະຫາຊົນ ສາມາດຈັດຕັ້ງປະຕິບັດໄດ້ໃນໄລຍະຜ່ານມາ. ພ້ອມນັ້ນ, ທ່ານຍັງໄດ້ໂອ້ລົມຕໍ່ສະມາຊິກຂອງ 3 ອົງການຈັດຕັ້ງ ກໍຄືພະນັກງານ ສພຂ ຈົ່ງສືບຕໍ່ສຶກສາອົບຮົມດ້ານການເມືອງແນວຄິດໃຫ້ສະມາຊິກຂອງ 3 ອົງການຈັດຕັ້ງ, ຍົກສູງສືບຕໍ່ຈັດຕັ້ງປະຕິບັດພາລະບາດບົດຂອງຕົນຢ່າງຕັ້ງໜ້າ, ສືບຕໍ່ຮ່ຳຮຽນເອົາບົດຮຽນທີ່ດີເພື່ອຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ໄດ້ຮັບຜົນສຳເລັດ ແລະ ຮັກສາຄວາມສາມັກຄີພາຍໃນໃຫ້ແໜ້ນແຟ້ນ ແລະ ພາຍນອກໃຫ້ກວ້າງຂວາງ

(ນາງ ສຸກສະຫວັນ ອິນທະແສງ)






# ພິທີວາງກະຕ່າດອກໄມ້ຢູ່ອະນຸສອນສະຖານປະທານໂຮ່ຈິມິນ



(ສພຊ) ເນື່ອງໃນໂອກາດວັນວັນຄ້າຍວັນເກີດຂອງປະທານ ໂຮ່ຈິມິນ ຄົບຮອບ 132 ປີ, (19/5/189019/5/2022), ໃນຕອນເຊົ້າຂອງວັນທີ 19 ພຶດສະພາ 2022 ໄດ້ມີພິທີວາງກະຕ່າດອກໄມ້ ຢູ່ອະນຸສອນສະຖານປະທານ ໂຮ່ຈິມິນ ເຊິ່ງນຳໂດຍສະຫາຍ ກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງສະຫວັນນະເຂດ, ມີທ່ານກົງສູນໃຫຍ່ ແຫ່ງ ສສ ຫວຽດນາມ ປະຈຳແຂວງ, ມີຄະນະພັກ-ຄະນະບັນຊາກອງບັນຊາການທະຫານແຂວງ, ຄະນະພັກຄະນະບັນຊາກອງບັນຊາການ ປກສ ແຂວງ, ພະແນກການຕ່າງໆອ້ອມຂ້າງແຂວງ, ອົງການຈັດຕັ້ງມະຫາຊົນເຂົ້າຮ່ວມ.

ທັງນີ້, ກໍເພື່ອສະແດງຄວາມເຄົາລົບຮັກ, ຄວາມກະຕັນຍູຮູ້ບຸນຄຸນ, ສັນລະເສີນເຖິງຄຸນງາມຄວາມດີ ແລະ ຜົນງານອັນໃຫຍ່ຫລວງຂອງປະທານ ໂຮ່ຈິມິນ ທີ່ໄດ້ອຸທິດຕະຫລອດຊີວິດເພື່ອປະເທດຊາດ ແລະ ການປະຕິວັດ, ປະທານ ໂຮ່ຈິມິນ ເປັນຜູ້ນຳເອົາແນວຄິດ ແລະ ທອນໄຟປະຕິວັດທີ່ຍິ່ງໃຫຍ່ຂອງຫວຽດນາມ ແລະ ຂອງໂລກ, ເປັນນັກຮົບປະຕິວັດຜູ້ດີເລີດຂອງຂະບວນການກອມມູນິດ ແລະ ກຳມະກອນສາກົນ ໃນເວລາທີ່ມີຄວາມໝາຍປະຫວັດສາດ ເຊິ່ງສະຫາຍປະທານ ກໍໄດ້ເປັນໜຶ່ງໃນບັນດາຜູ້ນຳຮຸ່ນທຳອິດທີ່ໄດ້ຮ່ວມຂະບວນການປະຕິວັດ, ສ້າງຕັ້ງພັກ ແລະ ສ້າງຕັ້ງລະບອບໃໝ່. ຕະຫລອດຊີວິດສະຫາຍປະທານໄດ້ເສຍສະຫລະ ແລະ ອຸທິດຕົນຕໍ່ພາລະກິດຕໍ່ສູ້ກູ້ຊາດ, ປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃຫ້ຈະເລີນກ້າວໜ້າ; ແບບຢ່າງ ແລະ ຄຸນສົມບັດສົມທຳດັ່ງກ່າວ ແມ່ນໄດ້ເປັນແວ່ນແຍງອັນໃສແຈ້ງສຳລັບພະນັກງານ, ສະມາຊິກພັກ, ນັກຮົບແລະ ປະຊາຊົນ.

# ກອງປະຊຸມວຽກງານຄະນະເລຂາທິການ ສພຂ ບໍລິຄຳໄຊ ປະຈຳປີ 2021




(ສພຊ) ໃນວັນທີ 20 ພຶດສະພາ 2022 ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ໄດ້ຈັດກອງປະຊຸມວຽກງານຄະນະເລຂາທິການ ສພຂ ປະຈຳປີ 2021 ຂຶ້ນ ໂດຍການເປັນປະທານຂອງ ທ່ານ ນາງ ຟອງສະໝຸດ ພົງວິຈິດ ເລຂາທິການ ສພຂ, ເຂົ້າຮ່ວມມີທ່ານ ປອ. ສຸວັນນີ ໄຊຊະນະ ປະທານ ສພຂ, ມີບັນດາຄະນະປະຈຳ ສພຂ, ປະທານຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ແລະ ພາກສ່ວນກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງການລາຍງານການເຄື່ອນໄຫວວຽກງານແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ທິດທາງແຜນການ ປະຈຳປີ 2022 ຂອງຄະນະເລຂາທິການ ສພຂ ວ່າ: ຄະນະເລຂາທິການກໍໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນຖານະທີ່ເປັນເສນາທິການໃຫ້ແກ່ ສພຂ, ຄະນະປະຈຳ ສພຂ ໃນການຄົ້ນຄວ້າ-ສັງລວມເນື້ອໃນວຽກງານຮອບດ້ານ; ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຂອງ ສພຂ, ຄະນະປະຈຳສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ; ຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນ, ພ້ອມນີ້ ຍັງໄດ້ປັບປຸງແບບແຜນວິທີເຮັດວຽກ, ມີການແບ່ງງານແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ, ປະສານສົມທົບກັບຫ້ອງວ່າການແຂວງ, ພາກສ່ວນທີ່ກ່ຽວຂ້ອງ ແຕ່ລະໄລຍະເປັນຢ່າງດີ, ເຊິ່ງໄດ້ຍົກໃຫ້ເຫັນບາງວຽກງານທີ່ພົ້ນເດັ່ນໄດ້ພິຈາລະນາ, ຮັບຮອງເອົາບັນຫາທີ່ສຳຄັນຕ່າງໆ ຕາມການສະເໜີຂອງອົງການປົກຄອງແຂວງ ແລະ ສພຂ ຕາມຂອບເຂດສິດ ແລະ ໜ້າທີ່ໄດ້ທັງໝົດ 17 ຄັ້ງ, ສ້າງ ແລະ ປັບປຸງນິຕິກຳຂອງ ສພຂ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຂອງຕົນ ແລະ ນິຕິກຳອື່ນໆ ໄດ້ທັງໝົດ 20 ກວ່າສະບັບ, ສ້າງແຜນໃຫ້ ສສຊ, ສສຂ ລົງພົບປະປະຊາຊົນ ແລະ ໂຄສະນາເຜີຍແຜ່ຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກ ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II, ຜ່ານການຈັດຕັ້ງປະຕິບັດ ສາມາດລົງເຄື່ອນໄຫວໄດ້ 118 ຈຸດ, ໃນນີ້ 4 ສຳນັກເມືອງ; ມີ 4 ກົມກອງ, 3 ໂຮງຮຽນ ແລະ 107 ບ້ານ ມີຜູ້ເຂົ້າຮ່ວມຮັບຟັງ 8.566 ຄົນ, ຍິງ 4.313 ຄົນ, ຈັດຕັ້ງປະຕິບັດວຽກງານສື່ມວນຊົນ ໃນການໂຄສະນາເຜີຍແຜ່ພາລະບົດບາດ, ສິດ ແລະ ໜ້າທີ່ ແລະ ການເຄື່ອນໄຫວວຽກງານຂອງ ສພຂ , ຄະນະປະຈຳ ສພຂ, ຄະນະ ສສຊ ປະຈຳເຂດເລືອກຕັ້ງ ຜ່ານສື່ມວນຊົນອອກຂ່າວທາງວິທະຍຸ, ໂທລະພາບ, ໜັງສືພິມ, ສື່ສັງຄົມອອນລາຍ, ດຳເນີນລາຍການຜູ້ແທນປະຊາຊົນ ຜ່ານວິທະຍຸກະຈາຍສຽງແຂວງ ໃນຕອນເຊົ້າເວລາ 8:00 ໂມງຂອງທຸກໆວັນພະຫັດ.

ກອງປະຊຸມ ຍັງໄດ້ຮັບຟັງການລາຍງານກ່ຽວກັບບາງມາດຕາ ຂອງຂໍ້ຕົກລົງຮ່ວມ ວ່າດ້ວຍການປະສານງານລະຫວ່າງຄະນະເລຂາທິການ ສພຂ ກັບຫ້ອງວ່າການແຂວງບໍລິຄຳໄຊ, ການເປັນເສນາທິການໃຫ້ແກ່ອົງການປົກຄອງແຂວງ ໃນການກະກຽມບັນດາເນື້ອໃນທີ່ຈະນຳເຂົ້າມາຄົ້ນຄວ້າພິຈາລະນາຮັບຮອງໃນກອງປະຊຸມສະພາປະຊາຊົນແຂວງ, ກອງປະຊຸມສະໄໝສາມັນ, ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ, ວຽກງານພາຍຫລັງສ້າງຕັ້ງໜ່ວຍງານຊ່ວຍວຽກຂອງຄະນະ ສສຂ ປະຈຳເມືອງວຽງທອງ, ເພື່ອເປັນການສະຫລຸບຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ວາງທິດທາງແຜນການ ປະຈຳປີ 2022 ຂອງຄະນະເລຂາທິການສະພາປະຊາຊົນແຂວງ, ຜູ້ແທນກອງປະຊຸມປະກອບຄຳຄິດຄຳເຫັນຕາມຄຳເຈາະຈີ້ມຂອງປະທານກອງປະຊຸມ ແລະ ໃຫ້ຄວາມກະຈ່າງແຈ້ງເພີ່ມເຕີມຕໍ່ວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງຈຳນວນໜຶ່ງ.

ພ້ອມນີ້, ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກທ່ານ ປອ. ສຸວັນນີ ໄຊຊະນະ ໂດຍທ່ານໄດ້ເນັ້ນໜັກໃຫ້ສືບຕໍ່ຈັດຕັ້ງຜັນຂະຫຍາຍແຜນການ 5 ປີ ຂອງສະພາປະຊາຊົນແຂວງ ແລະ ຂອງຄະນະເລຂາທິການສະພາປະຊາຊົນແຂວງ ມາເປັນແຜນງານ, ໂຄງການອັນລະອຽດໃນແຕ່ລະໄລຍະ ແນໃສ່ເຮັດໃຫ້ທິດທາງ ແລະ ຄາດໝາຍລວມໄດ້ຮັບການຈັດຕັ້ງປະຕິບັດມີຜົນສຳເລັດຕາມແຜນການກຳນົດໄວ້, ສືບຕໍ່ເອົາໃຈໃສ່ແກ້ໄຂບັນດາຂໍ້ຄົງຄ້າງໃນໄລຍະຜ່ານມາໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ ແລະ ມີລັກສະນະບຸກທະລຸຢ່າງແຂງແຮງຂຶ້ນກວ່າເກົ່າທັງ 4 ດ້ານ ໂດຍສະເພາະແມ່ນບຸກທະລຸທານດ້ານຈິນຕະນາການ, ລະບຽບການບໍລິຫານ ແລະ ການພັດທະນາຊັບພະຍາກອນມະນຸດໃນຂົງເຂດວຽກງານຂອງຕົນ.

(ໂສລະຢ່າ ໄຊຍະວົງ)



## ສຸກສະບາຍຫາຍໂຣຄ

# ໂລກຫລອດເລືອດໃນສະໝອງ

ໂດຍ: ສາວແອ່ນ



ໂລກຫລອດເລືອດສະໝອງ ຫລື ເສັ້ນເລືອດຕັນ ແມ່ນອາການທີ່ສະໝອງຂາດເລືອດໄປລ້ຽງສະໝອງ ເນື່ອງຈາກການຕີບ, ຕັນ ຫລື ແຕກຂອງເສັ້ນເລືອດ ເຮັດໃຫ້ເນື້ອເຍື່ອສະໝອງຖືກທຳລາຍ ໃຫ້ການເຮັດວຽກຂອງສະໝອງບາງສ່ວນ ຫລື ທັງໝົດຜິດປົກກະຕິ ເຊິ່ງມັກຈະເກີດຂຶ້ນຢ່າງກະທັນຫັນ ເຮັດໃຫ້ເກີດອາການ:

- ເວົ້າບໍ່ແຈ້ງ ລີ້ນແຂງ.
- ຄິດຄຳສັບຕ່າງໆບໍ່ອອກ ສື່ສານບໍ່ເຂົ້າໃຈ.
- ແຂນຂາອ່ອນແຮງ ຫລື ມຶນຊາຂ້າງໃດຂ້າງໜຶ່ງ.
- ວິນຫົວ, ຍ່າງເຊ
- ເຫັນຮູບພາບຊ້ອນ, ສາຍຕາຜິດປົກກະຕິ.

ເຊິ່ງອາດຈະສັງເກດອາການໄດ້ຕາມຫລັກການ FAST ເຊິ່ງປະກອບມີ:

- F : ໃບໜ້າ (face) ຄົນເຈັບຈະມີໃບໜ້າທີ່ບິດບ້ຽວ.
- A : ແຂນ (arm) ແຂນຂາອ່ອນແຮງ
- S : ການເວົ້າ (speech) ຄົນເຈັບຈະເວົ້າບໍ່ແຈ້ງ, ເວົ້າບໍ່ມີແຮງ ຄືວ່າລີ້ນຄັບປາກ
- T : ເວລາ (time) ນຳສົ່ງຄົນເຈັບທີ່ສົງໄສໄປໂຮງໝໍທີ່ໃກ້ທີ່ສຸດ ໄວເທົ່າທີ່ຈະໄວໄດ້.

**ວິທີປ້ອງກັນ**

- ໝັ່ນກວດເບິ່ງຄວາມດັນເລືອດ ຖ້າຄວາມດັນເລືອດສູງກວ່າ 140/80 mmHg ຄວນໄປພົບແພດ ແລະ ກິນຢາປິ່ນປົວຄວາມດັນເລືອດໃຫ້ເປັນປົກກະຕິຕາມໝໍສັ່ງ;
- ປັບປ່ຽນນິໄສການກິນອາຫານ ໂດຍການຫລຸດການກິນອາຫານທີ່ບໍ່ເຄັມຫລາຍ, ບໍ່ຫວານຫລາຍ, ບໍ່ເຜັດຫລາຍ ແລະ ປ່ຽນມາກິນຜັກ ແລະ ໝາກໄມ້ໃຫ້ຫລາຍຂຶ້ນ;
- ເຊົາສູບຢາ ແລະ ເຄື່ອງດື່ມທີ່ມີທາດເຫລົ້າ;
- ຫລຸດນ້ຳໜັກ ໃນກໍລະນີທີ່ມີນ້ຳໜັກຫລາຍເກີນໄປ;
- ອອກກຳລັງກາຍເປັນປົກກະຕິ ຢ່າງໜ້ອຍອາທິດລະ 3 ເທື່ອ ການອອກກຳລັງກາຍຄວນເປັນການອອກກຳລັງກາຍທີ່ເຮັດໃຫ້ຫົວໃຈເຕັ້ນໄວກວ່າປົກກະຕິ ຢ່າງນ້ອຍ 10-20 ເທື່ອຕໍ່ນາທີ ແລະ ຢ່າງໜ້ອຍເຄິ່ງຊົ່ວໂມງໃນແຕ່ລະຄັ້ງ;
- ກວດສຸຂະພາບປະຈຳປີທຸກໆປີ ເພື່ອວັດແທກລະດັບນ້ຳຕານ ແລະ ໄຂມັນໃນເລືອດ ເພື່ອຊອກຫາປັດໄຈສ່ຽງທີ່ເກີດຈາກເສັ້ນເລືອດຕັນໃນສະໝອງ;
- ໝັ່ນກວດເຊັກຫົວໃຈວ່າມີຄວາມຜິດປົກກະຕິຂອງການເຕັ້ນຂອງຫົວໃຈຫລືບໍ່.

www.praram9.com

## ສາລາກະວີ

# ກອດເບິ່ງຄືນ

ສໍ ແພງຄຳຮັກ

※ ກອດເບິ່ງຄືນແມ່ນຂໍ້ ຫົວບົດກ່າວກະວີກອນ
ເປັນສຳນວນຊວນຄິດ ຊອກຫາວິທີແກ້
ເພາະວ່າດົນນານແລ້ວ ຄວນປັບປຸງທັນປ່ຽນ
ຝືນປ່ອຍປະແບບນີ້ ຜົນໄດ້ຊິສ່ຳໃດ

※ ພັກລັດກຳນົດໄວ້ ວັນທີ 1 ມິຖຸນາ
ຮຽກຮ້ອງປວງປະຊາ ແຕ່ເໜືອເຖິງໃຕ້
ເປັນພະລັງໂຮມເຕົ້າ ຂະບວນການສຸມໃສ່
ລົງມືປູກຜົດໄມ້ ເຕັມດ້າວທົ່ວແດນ

※ ຫລາຍແນວພັນແກ່ນໄມ້ ນຳໄປປູກເປັນດົງ
ແຕ່ຂ່າຍຸງຍາງແດງ ປູກທົດແທນເສີມເພີ້ມ
ເພາະວ່າດົງດອນໄມ້ ຖືກທຳລາຍຫລາຍປີຜ່ານ
ທຳມະຊາດກໍປ່ຽນປີ້ນ ລະວັງໄວ້ແມ່ນດີ

※ ມີບາງວັນຝົນກະໜ່ຳພື້ນ ເຫງັ່ງລົມໄຫລ
ຖ້ວມໄຮ່ນາເຮືອນຊານ ດັ່ງເຫັນມາແລ້ວ
ບາງວັນແດດຮິບເອົ້າ ຈົນຜິວກາຍແດງແສບ
ທັງໝົດມວນໝູ່ນັ້ນ ເພາະດົນຟ້າປ່ຽນແປງ ວ່ານາ!

※ ກັບມາເວົ້າບ່ອນນັ້ນ ວັນທີ 1 ມິຖຸນາ
ແຕ່ລະປີລະດົມກັນ ປູກແນວພັນໄມ້
ສຳຄັນປູກໄປແລ້ວ ກວດກາຄືນປະເມີນເບິ່ງ ບໍ່ນໍ
ຕາຍແລະເຫລືອຈັກຕົ້ນ ອັນນີ້ເບິ່ງຄືນ ທ່ານເອີຍ!

## ເບີໂທສຸກເສີນ

❑ ຕຳຫລວດ

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າມະນຸດ 021 970543



## ທັກທາຍ ລະບາຍ

# ສາວຈົ້ມ

**(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຖິ່ງພິທີການ)**

※ *ວັນທີ 31 ຜ່ານມາ* ***ສະພາແຫ່ງຊາດ*** *ໄດ້ຈັດພິທີ* ***ສະເຫລີມສະຫລອງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງ*** *ຊາດ ບັນຍາກາດຄຶກຄື້ນຄືນ ເນືອງທີ່ອສັງຄົມ ມີທັງຮົມສິລະປະ ພ່ຳກິດຈະກຳແຕ້ມ ແຖມນຳພານັກຮຽນຊັ້ນ* ***ປ ປະຖົມ-ມັດທະຍົມແດ່*** *ແຫ່ຢາມຊົມຢ້ຽມ* ***ຫ້ອງ ປະຊຸມ*** *ເບື້ອງບ່ອນ* ***ສະພາ ຄັກເດ!***

※ ***ສະແດງ*** *ຄວາມ* ***ຍິນດີ*** *ນຳເຈົ້າຂອງ* ***ຕຳແໜ່ງບໍລິຫານໃໝ່*** *ໝົດທຸກຄົນ* ***ພາຍໃນສະພາແຫ່ງຊາດ*** *ທີ່ໄດ້ປະກາດແຕ່ງຕັ້ງຢ່າງຄຶກຄື້ນ ໃນ* ***ວັນທີ 30 ຜ່ານມາ*** *ຄົນສະພາແຫ່ທຸ້ມ ໂຮມຮ່ວມດີໃຈ ນຳເດີ! ຂໍໃຫ້ສຸມແຮງເຮັດ ເພື່ອປະຊາເມືອງບ້ານ ຂໍໃຫ້ຊາບອາສາສູ້ ໝັກ-ເບົາເອົາໃຈໃສ່ ອະນາຄົດຊາດມອບໃຫ້ ຍັງມີເຈົ້າຄູ່ຊູ່ຄົນ* ***ນັ້ນແລ້ວ!***

※ ***"ການ*** *ຄຸ້ມຄອງດ້ານການເງິນ-ເງິນຕາ ແລະການຄຸ້ມຄອງລາຄາສິນຄ້າອຸປະໂພກ" ຍົກໃຫ້ເຫັນວ່າ ເພື່ອບໍ່ໃຫ້ລາຄາສິນຄ້າໃນທ້ອງຕະຫລາດເໜັງຕີງແຮງນັ້ນ ໝົດທຸກຄົນໃນຊາດ ຕ້ອງ* ***ຊ່ອຍກັນປະຢັດ*** *ມັດທະຍັດ* ***ໃຊ້ຈ່າຍໃນສິ່ງທີ່ຈຳເປັນ*** *ໂດຍສະເພາະແມ່ນ* ***ການຊົມໃຊ້ນ້ຳມັນເຊື້ອໄຟ*** *ແລະຫາກທ່ານໃດພົບເຫັນການສວຍໂອກາດຂຶ້ນລາຄາສິນຄ້າ ສາມາດໂທໄປ* ***1510 ສາຍດ່ວນ*** *ຈອກບອກແຈ້ງ ສອດສ່ອງເປັນຫູ-ຕາ ເພາະປັດຈຸບັນລາຄາ ແລະຄ່າເງິນຜັນຜວນອຸ້ນ ຂໍໃຫ້ປວງຊົນເຊື້ອ* ***ມີສະຕິ*** *ປະຢັດຊ່ວຍ* ***ກັນເນີ!*** *ຜ່ານວິກິດໄປໃຫ້ໄດ້ ເຮົາຕ້ອງສູ້ຊ່ອຍກັນ* ***ນັ້ນແລ້ວ!***

## ຊວນຍິ້ມ

# ແອ່ນຕຸ້ງ

**ເລື່ອງ: ຄວາມໃນໃຈຂອງນັກຂຽນ**

ທິດເຈີດ ແລະ ຊຽງແອ່ນ ສອງສ່ຽວລົມກັນ

**ທິດເຈີດ:** ເປັນນັກຂຽນມາສິບປາຍປີບໍ່ເຄີຍມີໃຜສົນ ໃຈຜົນງານກູ! ມາມື້ນີ້ມີຄົນອ່ານຢ່າງໃຈຈົດໃຈຈໍ່

**ຊຽງແອ່ນ:** ມຶງຂຽນນິຍາຍເລື່ອງໃໝ່ຫວາ?

**ທິດເຈີດ:** ບໍ່ ກູຂຽນລາຍການອາຫານ ແລະ ເຄື່ອງດື່ມ ເພາະກູເປີດຮ້ານໃໝ່

**ຊຽງແອ່ນ:** !!!



## ຄະຕິເຕືອນໃຈ

# ດວງຂະຍອມ

ໝູກັດຫູກຶ່ງຮູ້ຄຸນແມວ
ລູກແຂວນແອວຶງຮູ້ຄຸນພໍ່ແມ່

# ງານວາງສະແດງຮູບແຕ້ມທີ່ເປັນເອກະລັກສະເພາະຂອງເຍົາວະຊົນ




ໃນວັນບຸນ "ເດັກນ້ອຍໂລກ" ປີ 2022 ຈັດຂຶ້ນໂດຍກະຊວງວັດທະນະທຳ, ກິລາ ແລະ ທ່ອງທ່ຽວ ໃນວັນທີ 28 ພຶດສະພາ ເຖິງວັນທີ 2 ມິຖຸນາ ເພື່ອສະເຫລີມສະຫລອງວັນເດັກນ້ອຍສາກົນ (ວັນທີ 1 ມິຖຸນາ), ຢູ່ສູນວາງສະແດງວັດທະນະທຳ, ສິລະປະຫວຽດນາມ (ເລກທີ 2 ຮວາລີ, ຮ່າໂນ້ຍ), ໄດ້ວາງສະແດງບັນດາຮູບແຕ້ມທີ່ເປັນເອກະລັກສະເພາະຂອງເຍົາວະຊົນຢູ່ພາຍໃນ ແລະ ສາກົນ ດ້ວຍຫົວຂໍ້ "ເດັກນ້ອຍຫວຽດນາມ-ເອກອ້າງທະນົງໃຈທີ່ໄດ້ເຕີບໃຫຍ່ພ້ອມກັບປະເທດ"; "ລຸງໂຮ່ ກັບເຍົາວະຊົນ, ເຍົາວະຊົນກັບລຸງໂຮ່"; "ຫວຽດນາມ-ກູບາ ເຕັມໄປດ້ວຍນໍ້າໃຈສາມັກຄີ".

ສອງງານວາງສະແດງ "ເດັກນ້ອຍຫວຽດນາມ-ເອກອ້າງທະນົງໃຈທີ່ໄດ້ເຕີບໃຫຍ່ພ້ອມກັບປະເທດ" ແລະ "ລຸງໂຮ່ ກັບເຍົາວະຊົນ, ເຍົາວະຊົນກັບລຸງໂຮ່" ໄດ້ມີການວາງສະແດງບັນດາຮູບແຕ້ມເດັກນ້ອຍຫວຽດນາມຕັ້ງໜ້າເຂົ້າຮ່ວມການເຄື່ອນໄຫວຮັກຊາດ, ເພື່ອປະກອບສ່ວນເຂົ້າໃນໄຊຊະນະຂອງພາລະກິດປົດປ່ອຍຊາດ ແລະ ທ້ອນໂຮມປະເທດຊາດເປັນເອກະພາບ ແລະ ໃນກິດຈະການປ່ຽນແປງໃໝ່ໃນປະຈຸບັນ. ງານວາງສະແດງ "ຫວຽດນາມ-ກູບາ ເຕັມໄປດ້ວຍນໍ້າໃຈສາມັກຄີ" ເນື່ອງໃນໂອກາດສະເຫລີມສະຫລອງ 62 ປີ ແຫ່ງວັນສ້າງຕັ້ງການພົວພັນທາງການທູດຫວຽດນາມ-ກູບາ (2/12/1960-2/12/2022), ໄດ້ວາງສະແດງຮູບແຕ້ມ 120 ແຜ່ນຂອງເຍົາວະຊົນຫວຽດນາມ-ກູບາ ທີ່ໄດ້ຮັບລາງວັນໃນການແຂ່ງຂັນແຕ້ມຂອງສອງປະເທດ.

**ແຫລ່ງຂ່າວ:**
**ກອງທັບປະຊາຊົນຫວຽດນາມ**

# ໂກລົມເບຍ ເລີ່ມຕົ້ນການເລືອກຕັ້ງປະທານາທິບໍດີ

ການຢັ່ງຫາງສຽງກ່ອນເລີ່ມດຳເນີນການເລືອກຕັ້ງໄດ້ສະແດງໃຫ້ເຫັນວ່າ ທ່ານ Gustavo Petro, ມີອາຍຸ 62 ປີ ຜູ້ຕາງໜ້າສຳພັນທະມິດຝ່າຍຊ້າຍ Pacto Historico ພວມມີທ່າໄດ້ປຽບຊົ່ວຄາວດ້ວຍອັດຕາສະໜັບສະໜູນເກືອບ 40%.

ຕອນຄໍ່າວັນທີ 29 ພຶດສະພາ, ບັນດາສະຖານທີ່ປ່ອນບັດເລືອກຕັ້ງໃນທົ່ວປະເທດ ໂກລົມເບຍ ໄດ້ເປີດປະຕູ, ເລີ່ມຕົ້ນຮອບທີ 1 ຂອງການເລືອກຕັ້ງປະທານາທິບໍດີປະເທດນີ້. ມີຜູ້ມີສິດເລືອກຕັ້ງປະມານ 39 ລ້ານຄົນ ໄດ້ເຂົ້າຮ່ວມການປ່ອນບັດເລືອກຕັ້ງຮອບທີ 1 ເພື່ອເລືອກຕັ້ງປະທານາທິບໍດີຄົນໃໝ່ໃນປີ 2022-2026.

ການຢັ່ງຫາງສຽງກ່ອນເລີ່ມດຳເນີນການເລືອກຕັ້ງໄດ້ສະແດງໃຫ້ເຫັນວ່າ ທ່ານ Gustavo Petro, ອາຍຸ 62 ປີ, ຜູ້ຕາງໜ້າສຳພັນທະມິດຝ່າຍຊ້າຍ Pacto Historico, ພວມມີທ່າໄດ້ປຽບ ດ້ວຍສຽງສະໜັບສະໜູນເກືອບ 40%. ຖັດຈາກທ່ານ Gustavo Petro ແມ່ນຜູ້ສະໝັກເລືອກຕັ້ງຝ່າຍກາງ Federico Gutierrez, ອາຍຸ 47 ປີ, ດ້ວຍສຽງສະໜັບສະໜູນເກືອບ 30%. ຄາດວ່າ ບໍ່ມີໃຜໃນຈຳນວນຜູ້ສະໝັກເລືອກຕັ້ງ 7 ທ່ານມີຄວາມສາມາດຍາດໄດ້ໄຊຊະນະໃນຮອບເລືອກຕັ້ງທີ 1 ແລະມີຄວາມເປັນໄປໄດ້ສູງວ່າຜູ້ສະໝັກເລືອກຕັ້ງສອງທ່ານດັ່ງກ່າວຈະສືບຕໍ່ສູ້ຍັນກັນຢູ່ຮອບທີ 2 ເຊິ່ງແມ່ນຮອບທີ່ມີລັກສະນະຕັດສິນທີ່ຈະດຳເນີນຫລັງຈາກນັ້ນ 2 ອາທິດ.

**ແຫລ່ງຂ່າວ:**
**ວິທະຍຸກະຈ່າຍສຽງຫວຽດນາມ**



# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 30 ເອກະສານປະກອບການຂຶ້ນທະບຽນຍານພາຫະນະທາງບົກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂຶ້ນທະບຽນຍານພາຫະນະທາງບົກ ທຸກປະເພດ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຂຶ້ນທະບຽນ;
2. ສຳເນົາຖ່າຍ ໃບສຳມະໂນຄົວ ຫຼື ບັດປະຈຳຕົວ, ຂໍ້ຕົກລົງສ້າງຕັ້ງ ຫຼື ໃບທະບຽນ ວິສາຫະກິດ;
3. ໃບຢັ້ງຢືນ ຊື້ ຂາຍ;
4. ໃບອະນຸຍາດນຳສິນຄ້າເຂົ້າຈາກຂະແໜງການອຸດສາຫະກຳ ແລະ ການຄ້າ;
5. ໃບອະນຸຍາດນຳເຂົ້າທາງດ້ານເຕັກນິກຈາກກະຊວງໂຍທາທິການ ແລະ ຂົນສົ່ງ;
6. ໃບແຈ້ງພາສີ, ໃບຢັ້ງຢືນການເສຍພາສີ, ເວັ້ນເສຍແຕ່ມີການຍົກເວັ້ນພາສີ, ສ່ວຍສາອາກອນ ຕາມການຕົກລົງຂອງລັດຖະບານ.

ສຳລັບ ລົດບໍລິຫານຂອງລັດ ຕ້ອງມີໃບສະເໜີຂຶ້ນບັນຊີຍານພາຫະນະທາງບົກຈາກຂະແໜງການການເງິນ, ສ່ວນລົດສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ແລະ ສາກົນ ຕ້ອງມີໃບສະເໜີຈາກກະຊວງການຕ່າງປະເທດ.

**ມາດຕາ 31 ປະເພດການຂຶ້ນທະບຽນຍານພາຫະນະທາງບົກ**

ການຂຶ້ນທະບຽນຍານພາຫະນະທາງບົກ ມີ ແປດປະເພດ ດັ່ງນີ້:

1. ບໍລິຫານຂອງລັດ;
2. ເອກະຊົນລາວ;
3. ເອກະຊົນຕ່າງດ້າວ;
4. ທຸລະກິດ ຮ້ອຍສ່ວນຮ້ອຍ 100%;
5. ທຸລະກິດ ໜຶ່ງສ່ວນຮ້ອຍ 1%;
6. ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ, ສາກົນປະຈຳ ຢູ່ ສປປລາວ;
7. ຊົ່ວຄາວ;
8. ກົນຈັກໜັກ ແລະ ກົນຈັກກະສິກຳ.

ສຳລັບ ການຂຶ້ນທະບຽນຍານພາຫະນະທາງບົກແຕ່ລະປະເພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 32 ຮູບແບບການຂຶ້ນທະບຽນຍານພາຫະນະທາງບົກ**

ການຂຶ້ນທະບຽນຍານພາຫະນະທາງບົກ ມີ ສອງຮູບແບບ ດັ່ງນີ້:

1. ການຂຶ້ນທະບຽນຍານພາຫະນະທາງບົກແບບຖາວອນ;
2. ການຂຶ້ນທະບຽນຍານພາຫະນະທາງບົກແບບຊົ່ວຄາວ.

**ມາດຕາ 33 ການຂຶ້ນທະບຽນຍານພາຫະນະທາງບົກແບບຖາວອນ**

ການຂຶ້ນທະບຽນຍານພາຫະນະທາງບົກແບບຖາວອນ ແມ່ນການຂຶ້ນທະບຽນໃຫ້ຍານພາຫະນະທາງ ບົກປະເພດ ບໍລິຫານຂອງລັດ, ເອກະຊົນລາວ, ເອກະຊົນຕ່າງດ້າວ, ທຸລະກິດ ຮ້ອຍສ່ວນຮ້ອຍ 100%, ທຸລະກິດ ໜຶ່ງສ່ວນຮ້ອຍ 1% ແລະ ກົນຈັກໜັກ ແລະ ກົນຈັກກະສິກຳ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂຶ້ນທະບຽນຍານພາຫະນະທາງບົກແບບຖາ ວອນ ຕ້ອງຍື່ນຄຳຮ້ອງ ພ້ອມດ້ວຍເອກະສານຄົບຊຸດຕໍ່ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ເພື່ອຂຶ້ນທະບຽນເປັນກຳມະສິດຂອງຕົນ.

ໃບທະບຽນຍານພາຫະນະທາງບົກ ມີອາຍຸການນຳໃຊ້ ຫ້າປີ ແລະ ສາມາດຕໍ່ໄດ້.

ໃນກໍລະນີ ຍານພາຫະນະທາງບົກທີ່ໄດ້ຂຶ້ນທະບຽນແລ້ວ ຫາກບໍ່ມາຕໍ່ທະບຽນພາຍໃນເວລາ ສາມປີ ນັບແຕ່ວັນໃບທະບຽນໝົດອາຍຸນັ້ນ, ກອງທະບຽນຍານພາຫະນະທາງບົກແຂວງ, ນະຄອນຫຼວງ ຈະລຶບລ້າງທະບຽນຍານພາຫະນະດັ່ງກ່າວ ອອກຈາກລະບົບບັນຊີການຂຶ້ນທະບຽນ.

ສຳລັບທະບຽນຍານພາຫະນະທາງບົກທີ່ຖືກລຶບລ້າງອອກຈາກລະບົບບັນຊີການຂຶ້ນທະບຽນ ຖ້າຫາກມີຄວາມຕ້ອງການຂຶ້ນທະບຽນຄືນໃໝ່ ຕ້ອງເຮັດໜັງສືສະເໜີຫາຂະແໜງການໂຍທາທິການ ແລະ ຂົນສົ່ງ ບ່ອນທີ່ຍານພາຫະນະທາງບົກໄດ້ຂຶ້ນທະບຽນ ພິຈາລະນາ, ກວດກາຄວາມຖືກຕ້ອງຂອງເອກະສານ, ເສຍຄ່າປັບໃໝ ແລະ ຄ່າທຳນຽມອື່ນຕາມລະບຽບການ.

**ມາດຕາ 34 ການຂຶ້ນທະບຽນຍານພາຫະນະທາງບົກແບບຊົ່ວຄາວ**

ການຂຶ້ນທະບຽນຍານພາຫະນະທາງບົກແບບຊົ່ວຄາວ ແມ່ນການຂຶ້ນທະບຽນໃຫ້ຍານພາຫະນະທາງບົກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີຈຸດປະສົງນຳລົດເຂົ້າມານຳໃຊ້ໃນໂຄງການທີ່ມີອາຍຸໜຶ່ງປີ ຂຶ້ນໄປ ຊຶ່ງໄດ້ຮັບອະນຸມັດຈາກລັດຖະບານ ຕ້ອງຂຶ້ນທະບຽນຍານພາຫະນະທາງບົກແບບຊົ່ວຄາວນຳກອງທະບຽນຍານພາຫະນະທາງບົກແຂວງ, ນະຄອນຫຼວງ ຊຶ່ງມີອາຍຸການນຳໃຊ້ທະບຽນ ໜຶ່ງປີ ແລະ ສາມາດຕໍ່ໄດ້.

ສຳນັກງານຜູ້ຕາງໜ້າຂອງ ຕ່າງປະເທດ, ສາກົນ ປະຈຳຢູ່ ສປປລາວ ທີ່ມີຈຸດປະສົງນຳຍານພາຫະນະທາງບົກເຂົ້າມານຳໃຊ້ໃນວຽກງານຂອງຕົນ ຕ້ອງຂຶ້ນທະບຽນຍານພາຫະນະທາງບົກແບບຊົ່ວຄາວ ນຳກອງທະບຽນຍານພາຫະນະທາງບົກແຂວງ, ນະຄອນຫຼວງ ຊຶ່ງມີອາຍຸການນຳໃຊ້ທະບຽນ ສອງປີ ແລະ ສາມາດຕໍ່ໄດ້ ຕາມລະບຽບການຂອງກະຊວງການຕ່າງປະເທດກຳນົດ.

**ມາດຕາ 35 ການຂຶ້ນທະບຽນຍານພາຫະນະທາງບົກຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ຍານພາຫະນະທາງບົກ ທີ່ນຳໃຊ້ເຂົ້າໃນວຽກງານວິຊາສະເພາະຈຳເພາະຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ຂຶ້ນທະບຽນ ແລະ ຕິດປ້າຍທະບຽນນຳກະຊວງປ້ອງກັນປະເທດ ຫຼື ກະຊວງປ້ອງກັນຄວາມສະຫງົບ.

ສຳລັບ ຍານພາຫະນະທາງບົກທີ່ຮັບໃຊ້ວຽກງານບໍລິຫານ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະ ຫງົບ ຕ້ອງຂຶ້ນທະບຽນ ແລະ ຕິດປ້າຍທະບຽນບໍລິຫານຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 36 ການຄຸ້ມຄອງສຳນວນເອກະສານຍານພາຫະນະທາງບົກ**

ສຳນວນເອກະສານຍານພາຫະນະທາງບົກ ທີ່ໄດ້ຂຶ້ນທະບຽນແລ້ວ ຕ້ອງເກັບຮັກສາໄວ້ ພາຍໃນເວລາ ສິບປີ, ຫຼັງຈາກນັ້ນ ສາມາດທຳລາຍໄດ້ ແຕ່ຂໍ້ມູນເອກະສານຍານພາຫະນະທາງບົກ ຕ້ອງເກັບຮັກສາໄວ້ໃນລະ ບົບຖານຂໍ້ມູນເອກະສານເອເລັກໂຕຣນິກ.

**ມາດຕາ 37 ຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບສ້າງຖານຂໍ້ມູນ

ອ່ານຕໍ່ສະບັບໜ້າ...




**ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນຸຄຳ ພິພັດເສລີ**

5. ຜູ້ຖືກຮ້ອງທຸກ ໝາຍເຖິງ ຜູ້ຖືກສະເໜີ, ຜູ້ຖືກຮ້ອງຟ້ອງ ແລະ ຜູ້ຖືກຮ້ອງຂໍຄວາມເປັນທຳ;

6. ຜູ້ສະເໜີ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ຍື່ນຄຳສະເໜີຂອງຕົນຕໍ່ການຈັດຕັ້ງ ທີ່ມີສິດ ແລະ ໜ້າທີ່ແກ້ໄຂທາງດ້ານບໍລິຫານ;

# ຮູບພາບການສະເຫລີມສະຫລອງວັນເດັກນ້ອຍສາກົນ ວັນທີ 1 ມິຖຸນາ 2022



























**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ